ສຽງຂອງສະພາແຫ່ງຊາດ

ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

17-24 ສິງຫາ 2026
ປີທີ 15 ສະບັບທີ 1078

ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ເດືອນກໍລະກົດ

(ສພຊ) - ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນກໍລະກົດ ໄດ້ຈັດຂຶ້ນລະຫວ່າງວັນທີ 6-7 ສິງຫາ 2026 ໂດຍການເປັນປະທານຂອງທ່ານ ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານຄະນະປະຈຳສະພາແຫ່ງຊາດ, ເຂົ້າຮ່ວມມີບັນດາຮອງປະທານ ແລະ ກຳມະການຄະນະປະຈຳສະພາແຫ່ງຊາດ, ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ, ຮອງປະທານກຳມາທິການ ແລະ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ, ຮອງລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຮອງປະທານສານປະຊາຊົນສູງສຸດ, ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ແລະ ພະນັກງານວິຊາການຂອງກະຊວງ, ອົງການທີ່ກ່ຽວຂ້ອງ ຈຳນວນໜຶ່ງ.

ກອງປະຊຸມໄດ້ພິຈາລະນາບັນຫາສຳຄັນ ທີ່ຕິດພັນກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ເຊິ່ງໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສະພາແຫ່ງຊາດ ເປັນຕົ້ນ: ໄດ້ຮັບຟັງການລາຍງານຜົນການຮຽບຮຽງກົດໝາຍ 2 ສະບັບຄື: ຮ່າງກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ປັບປຸງ)ແລະຮ່າງກົດໝາຍວ່າດ້ວຍຄັງເງິນແຫ່ງຊາດ (ສ້າງໃໝ່) ທີ່ກອງປະຊຸມສະໄໝວິສາມັນເທື່ອ

ອ່ານຕໍ່ໜ້າ 8

ແນວຄິດປະທານ
ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ການສ້າງພັກ ຕ້ອງສ້າງທັງໃນດ້ານການເມືອງ, ແນວຄິດ ແລະ ການຈັດຕັ້ງ, ຕ້ອງເອົາໃຈໃສ່ຢ່າງຈິດຈໍ່ເປັນປົກກະຕິເຖິງການເມືອງ ແລະ ແນວຄິດ; ແຕ່ພ້ອມກັນນັ້ນ, ກໍຕ້ອງຖືການສ້າງພັກດ້ານການຈັດຕັ້ງເປັນສຳຄັນ, ບໍ່ເບິ່ງເບົາດ້ານໃດດ້ານໜຶ່ງ.

(ນິພົນເລືອກເຟັ້ນ ເຫຼັ້ມ 1, ໜ້າ 157)

ອ່ານຕໍ່ສະບັບໜ້າ

ຮອງປະທານສະພາແຫ່ງຊາດ ເຮັດວຽກຢູ່ 3 ແຂວງ

(ສພຊ) - ທ່ານ ກອງ ແກ້ວ ໄຊສົງຄາມ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ (ຄປຈ ສພຊ) ໄດ້ໄປປະກາດກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ແລະ ການແຕ່ງຕັ້ງບຸກຄະລາກອນປະຈຳເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ, ເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ ແລະ ເຂດ

ອ່ານຕໍ່ໜ້າ 7

ປະກາດແຕ່ງຕັ້ງບຸກຄະລາກອນ ປະຈຳ 3 ເຂດເລືອກຕັ້ງ

(ສພຊ) - ພິທີປະກາດກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ແລະ ການແຕ່ງຕັ້ງບຸກຄະລາກອນປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ, ເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ ແລະ ເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ ໄດ້ຈັດຂຶ້ນໃນວັນທີ 3, 4 ແລະ 7 ສິງຫາ 2026 ຕາມລຳດັບ ໂດຍການເປັນປະທານຂອງທ່ານ ມອນໄຊ ລາວມີຊຶ່ງ ກຳມະການສູນກາງພັກ, ຮອງປະທານຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ); ເຂົ້າຮ່ວມມີບັນດາທ່ານກຳມະການສູນກາງພັກ, ເລຂາພັກແຂວງ, ປະ

ອ່ານຕໍ່ໜ້າ 6

ລາວ-ຫວຽດນາມ ເສີມຂະຫຍາຍການແລກປ່ຽນບົດຮຽນດ້ານການສ້າງ ແລະ ປັບປຸງກົງຈັກລັດ

(ສພຊ)-ການສ້າງແລະປັບປຸງກົງຈັກລັດຢ່າງຕໍ່ເນື່ອງ ໂດຍສະເພາະອົງການນິຕິບັນຍັດສູງສຸດ ແມ່ນຄວາມຮຽກຮ້ອງຕ້ອງການທີ່ຈຳເປັນຂອງລາວ ແລະ ຫວຽດນາມ ໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ, ສອງປະເທດຈຶ່ງໄດ້ເສີມຂະຫຍາຍການແລກປ່ຽນບົດຮຽນ, ປະສົບການ ແລະ ຮ່ວມມືກັນໃນຂົງເຂດການສ້າງກົງຈັກລັດ ກໍຄືອົງການນິຕິບັດ ຍັດ; ການຮ່ວມມືດັ່ງກ່າວ ເກີດຈາກຄວາມຄ້າຍຄືກັນຫຼາຍດ້ານ ທັງດ້ານປະຫວັດສາດ, ແນວທາງການພັດທະນາ, ອຸດົມການ

ອ່ານຕໍ່ໜ້າ 8

ເຜີຍແຜ່ຄູ່ມືວຽກງານເສດຖະກິດ-ການເງິນ

(ສພຊ) - ກອງປະຊຸມເຜີຍແຜ່ປຶ້ມຄູ່ມືວຽກງານຂົງເຂດເສດຖະກິດ ແລະ ການເງິນ ໄດ້ຈັດຂຶ້ນໃນວັນທີ 3-5 ສິງຫາ 2026 ທີ່ນະຄອນໄກສອນພົມວິຫານ ແຂວງສະຫວັນນະເຂດ ໂດຍການເປັນປະທານຂອງທ່ານ ຈັນທະບູນ ສຸກອາລຸນ ກຳມະການຄະນະປະຈຳສະພາແຫ່ງຊາດ,

ອ່ານຕໍ່ໜ້າ 5

ຄຳຂອບໃຈຂອງຄອບຄົວ ພົມວິຫານ

ພວກຂ້າພະເຈົ້າ ຄອບຄົວ ພົມວິຫານ ຂໍສະແດງຄວາມຮູ້ບຸນຄຸນ ແລະ ຄວາມຂອບໃຈ ອັນເລິກເຊິ່ງ ຕໍ່ການນຳພັກ-ລັດ, ຄະນະບໍລິຫານງານສູນກາງພັກ, ສະພາແຫ່ງຊາດ, ລັດຖະບານ, ສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ຄະນະຮັບຜິດຊອບຊາປະນະກິດລະດັບຊາດ,ບັນດາອະນຸກຳມະການ,ຄະນະພັກ-ອົງການປົກຄອງທ້ອງຖິ່ນ ຕະຫຼອດຮອດພະນັກງານ, ທະຫານ, ຕຳຫຼວດ, ຊາວໜຸ່ມ, ເຍົາວະຊົນ ແລະ ນັກຮຽນ, ການນຳຂອງປະເທດເພື່ອນມິດ, ຄະນະຜູ້ແທນຕ່າງປະເທດ, ທູຕານຸທູດ, ບັນດາອົງການຈັດຕັ້ງສາກົນ, ເພື່ອນມິດສະຫາຍ, ຍາດພີ່ນ້ອງ ທັງຢູ່ພາຍໃນ ແລະ ຕ່າງປະເທດ ທີ່ໄດ້ໃຫ້ກຳລັງໃຈ, ໃຫ້ຄວາມອົບອຸ່ນ, ແບ່ງເບົາຄວາມທຸກໂສກ ແລະ ໃຫ້ການຊ່ວຍເຫຼືອດ້ານຕ່າງໆ ເຮັດໃຫ້ງານຊາປະນະກິດລະດັບຊາດ ແລະ ພິທີທຳບຸນເຖິງດວງວິນຍານຂອງທ່ານ ໄຊສົມພອນ ພົມວິຫານ ໄດ້ດຳເນີນໄປຢ່າງສົມກຽດ ແລະ ສຳເລັດລຸລ່ວງໄປດ້ວຍດີ.

ພວກຂ້າພະເຈົ້າ ຂໍຈົດຈຳ ແລະ ລະລຶກໄວ້ໃນຄວາມຊົງຈຳຂອງຄອບຄົວ ພົມວິຫານ ຕະຫຼອດໄປ.

ຂໍອວຍພອນໄຊອັນປະເສີດແດ່ບັນດາທ່ານການນຳ, ອະດີດການນຳ ພັກ-ລັດ, ເພື່ອນມິດສະຫາຍ ທັງພາຍໃນ ແລະ ຕ່າງປະເທດ, ຍາດພີ່ນ້ອງທຸກໆທ່ານ ຈົ່ງມີສຸຂະພາບພະລານາໄມສົມບູນແຂງແຮງ, ມີຄວາມຜາສຸກ ແລະ ປະສົບຜົນສຳເລັດໃນໜ້າທີ່ວຽກງານຂອງບັນດາທ່ານດ້ວຍເຖີ້ນ.

ດ້ວຍຄວາມຮູ້ບຸນຄຸນ
ຈາກຄອບຄົວ ພົມວິຫານ

ຊົມເຊີຍ ວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 35 ປີ ຢ່າງສຸດໃຈ!

ທາບທາມຄຳເຫັນຮ່າງກົດໝາຍການປະກັນສຸຂະພາບ

(ສພຊ) - ຫ້ອງການປະກັນສຸຂະພາບແຫ່ງຊາດ ໄດ້ຈັດກອງປະຊຸມທາບທາມຄຳເຫັນຕໍ່ຮ່າງກົດໝາຍວ່າດ້ວຍການປະກັນສຸຂະພາບ (ສະບັບປັບປຸງ) ໃນລະຫວ່າງວັນທີ 6-8 ສິງຫາ ນີ້ ທີ່ທ່າລາດ ເມືອງແກ້ວອຸດົມ ແຂວງວຽງຈັນ ໂດຍການເປັນປະທານຮ່ວມຂອງທ່ານ ນາງ ອາພອນ ວິຊາເທບ ຮອງລັດຖະມົນຕີກະຊວງສາທາລະນະສຸກ ແລະ ທ່ານ ສີວຽງໄຊ ອໍລະບຸນ ຮອງປະທານຄະນະກຳມະການປົກຄອງແຂວງວຽງຈັນ ຜູ້ຊີ້ນຳວຽກງານສາທາລະນະສຸກ ເຊິ່ງມີບັນດາຜູ້ຕາງໜ້າຈາກກົມກົດໝາຍສະພາແຫ່ງຊາດ, ກົມກົດໝາຍຫ້ອງວ່າການສຳນັກງານປະທານປະເທດ, ກົມນິຕິກຳ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ກົມກົດໝາຍກະຊວງຍຸຕິທຳ; ຫົວໜ້າ-ຮອງຫົວໜ້າພະແນກສາທາລະນະສຸກ ຈາກ 9 ແຂວງຄື: ຫົວພັນ, ຊຽງຂວາງ, ວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ຈຳປາສັກ, ເຊກອງ, ອັດຕະປື ແລະ ໄຊສົມບູນ; ອົງການຈັດຕັ້ງສາກົນ JICA, WHO, KOFIH, ຫ້ອງການປະສານງານຂອງໂຄງການ HANSA II ພ້ອມດ້ວຍພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້, ໄດ້ປຶກສາຫາລື ແລະ ທາບທາມຄຳເຫັນບັນດາຜູ້ເຂົ້າຮ່ວມ ເພື່ອຊອກໃຫ້ເຫັນບັນຫາທີ່ບໍ່ສອດຄ່ອງ, ຊ່ອງວ່າງ, ຜົນກະທົບ ຫຼື ຂໍ້ຈຳກັດທີ່ເຮັດໃຫ້ບໍ່ສາມາດຈັດຕັ້ງປະຕິບັດໄດ້ດີໃນໄລຜ່ານມາ ເພື່ອເປັນຂໍ້ມູນພື້ນຖານໃຫ້ການປັບປຸງກົດໝາຍວ່າດ້ວຍການປະກັນສຸຂະພາບ ທີ່ຈະນຳສະເໜີເຂົ້າພິຈາລະນາ ແລະ ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X; ຮັບປະກັນໃຫ້ກົດໝາຍສະບັບນີ້ ມີເນື້ອໃນທີ່ຄົບຖ້ວນ, ຮັດກຸມ, ຖືກຕ້ອງ ແລະ ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ສະພາບການພັດທະນາເສດຖະກິດ-ສັງຄົມຕົວຈິງ ແນໃສ່ສ້າງຂີດຄວາມສາມາດ ແລະ ຂະຫຍາຍຕົວຢ່າງແຂງແຮງ ໃນວຽກງານປະກັນສຸຂະພາບ ໂດຍສະເພາະວຽກງານກອງທຶນໃຫ້ມີຄວາມວ່ອງໄວ, ທັນສະໄໝ ແລະ ໝັ້ນຄົງ.

ວຽກປະກັນສຸຂະພາບ ເປັນວຽກໜຶ່ງທີ່ສຳຄັນ ແລະ ຈຳເປັນ, ຮັບປະກັນໃຫ້ຜົນລະເມືອງລາວທັງໝົດ ໄດ້ເຂົ້າເຖິງການບໍລິການປິ່ນປົວ ໂດຍປາດສະຈາກຄວາມຫຍຸ້ງຍາກທາງດ້ານການເງິນ ເພື່ອທີ່ຈະຊ່ວຍໃຫ້ປະຊາຊົນລາວບັນດາເຜົ່າ ໄດ້ເຂົ້າເຖິງການບໍລິການປິ່ນປົວຮັກສາສຸຂະພາບທີ່ມີຄຸນນະພາບ, ທົ່ວເຖິງ ແລະ ຊ່ວຍແບ່ງເບົາຄ່າໃຊ້ຈ່າຍໃນສະຖານທີ່ບໍລິການປິ່ນປົວແຕ່ລະຂັ້ນ.

(ຂ່າວ: ວັນເພັ່ງ, ຂໍ້ມູນ: ກະຊວງສາທາລະນະສຸກ)

ປັບປຸງ ແລະ ຮຽບຮຽງຮ່າງກົດໝາຍນາຍທະຫານກອງທັບປະຊາຊົນລາວ

(ສພຊ) - ກອງປະຊຸມປັບປຸງ ແລະ ຮຽບຮຽງຮ່າງກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ (ສະບັບປັບປຸງ) ຕາມການປະກອບຄຳເຫັນຂອງສະມາຊິກລັດຖະບານ ໄດ້ຈັດຂຶ້ນເມື່ອວັນທີ 13 ສິງຫາ 2026 ທີ່ທ່າລາດ ແຂວງວຽງຈັນ ພາຍໃຕ້ການເປັນປະທານຮ່ວມໂດຍທ່ານ ວິແກ້ວ ບຸບຜາ ວັນ ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ຫສນຍ) ແລະ ທ່ານ ຄຳຟັນ ບຸນພາຄົມ ຮອງລັດຖະມົນຕີກະຊວງຍຸຕິທຳ, ມີຜູ້ຕາງໜ້າຈາກສະພາແຫ່ງຊາດ (ສພຊ), ຫສນຍ, ກະຊວງຍຸຕິທຳ ແລະ ກະຊວງປ້ອງກັນປະເທດ ເຂົ້າຮ່ວມ; ທັງນີ້, ກໍເພື່ອກວດກາຄືນການປະກອບຄຳເຫັນຂອງສະມາຊິກລັດຖະບານ ແລະ ອີງຕາມທິດຊີ້ນຳໃນການປັບປຸງເນື້ອໃນຮ່າງກົດໝາຍ ຂອງຄະນະປະຈຳພັກກະຊວງປ້ອງກັນປະເທດ.

ຜູ້ແທນກອງປະຊຸມໄດ້ພ້ອມກັນຕັ້ງໜ້າປະກອບຄຳເຫັນຢ່າງສ້າງສັນ ແລະ ກົງໄປກົງມາ ໂດຍສຸມໃສ່ປັບປຸງເນື້ອໃນບາງມາດຕາຕາມການເຈາะຈີ້ມຂອງສະມາຊິກລັດຖະບານ ເພື່ອເຮັດໃຫ້ກົດໝາຍສະບັບນີ້ ມີຄວາມຮັດກຸມ, ພາວະວິໄສ; ພ້ອມນັ້ນ, ຄະນະຮັບຜິດຊອບປັບປຸງກົດໝາຍ ກໍໄດ້ອະທິບາຍຄຳຊີ້ແຈງ ແລະ ຕອບຄຳຖາມເຈາะຈີ້ມ.

ຫຼັງຈາກນັ້ນ, ປະທານກອງປະຊຸມໄດ້ສະຫຼຸບ ແລະ ໃຫ້ທິດຊີ້ນຳຕໍ່ຄະນະຮັບຜິດຊອບໃຫ້ປັບທຶກຄຳຊີ້ແຈງຢ່າງລະອຽດ ຈະແຈ້ງ ເພື່ອນຳໄປອະທິບາຍລາຍງານຕໍ່ສະມາຊິກລັດຖະບານ ແລະ ນຳໄປລາຍງານຄະນະປະຈຳພັກກະຊວງປ້ອງກັນປະເທດ; ຈາກນັ້ນ, ຫສນຍ ຈະນຳສົ່ງຮ່າງກົດໝາຍເຖິງ ສພຊ ເພື່ອຄົ້ນຄວ້າໃນຂັ້ນຕໍ່ໄປ ແລະ ຄາດຄະເນວ່າຮ່າງກົດໝາຍດັ່ງກ່າວ ຈະຖືກຮັບຮອງໃນທ້າຍປີນີ້.

ຖອດຖອນບົດຮຽນເຄືອຂ່າຍບັງຄັບໃຊ້ 2 ກົດໝາຍ

(ສພຊ) - ວັນທີ 5-6 ສິງຫາ 2026, ເຄືອຂ່າຍບັງຄັບໃຊ້ກົດໝາຍວ່າດ້ວຍສັດປ່າ ແລະ ກົດໝາຍວ່າດ້ວຍປ່າໄມ້ (P-WEN) ແຂວງຈຳປາສັກ ໄດ້ຈັດກອງປະຊຸມປຶກສາຫາລື ແລກປ່ຽນບົດຮຽນຜົນການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ໂດຍການເປັນປະທານຮ່ວມຂອງທ່ານ ໄຊຍະສິດ ວິລະພັດ ຮອງຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ ແລະ ທ່ານ ຈັນຊະນະ ສີຈັນທອງທິບ ຮອງຫົວໜ້າກົມກວດກາ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ; ມີຜູ້ຕາງໜ້າຈາກ 2 ກອງບັນຊາການ, ອົງການໄອຍະການ, ພາສີ, ອົງການປົກຄອງທ້ອງຖິ່ນ 5 ເມືອງ (ໂຂງ, ສຸຂຸມາ, ໂພນທອງ, ມຸນລະປາໂມກ, ປະທຸມພອນ) ແລະ ອົງການອະນຸລັກສັດປ່າ (WCS) ເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ ມີຄວາມໝາຍຄວາມສຳຄັນຢ່າງຍິ່ງ ໃນການຜັນຂະຫຍາຍກົດໝາຍວ່າດ້ວຍສັດປ່າ, ກົດໝາຍວ່າດ້ວຍປ່າໄມ້ ແລະ ສົນທິສັນຍາສາກົນ CITES ທີ່ ສປປ ລາວ ເປັນພາຄີ ໃຫ້ປາກົດຜົນເປັນຮູບປະທຳ; ທັງນີ້ ກໍເພື່ອເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ກວດກາ ແລະ ຕ້ານການລັກລອບລ່າ, ຊື້-ຂາຍ, ເຄື່ອນຍ້າຍສັດປ່າ ແລະ ພືດປ່າຫວງຫ້າມ ຕາມຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 25/ນຍ, ລົງວັນທີ 18/9/2025 ແລະ ດຳລັດ ເລກທີ 299/ລບ, ລົງວັນທີ 05/6/2024.

ທ່ານ ໄຊຍະສິດ ວິລະພັດ ໄດ້ເນັ້ນໃຫ້ເຫັນວ່າ ແຂວງຈຳປາສັກ ເປັນແຂວງທີ່ມີຄວາມອຸດົມສົມບູນດ້ວຍເນື້ອທີ່ປ່າໄມ້ ກວມເຖິງ 68.93% ຂອງເນື້ອທີ່ທົ່ວແຂວງ, ມີປ່າສະຫງວນແຫ່ງຊາດ 3 ແຫ່ງ ແລະ ປ່າຜະລິດ, ປ່າປ້ອງກັນອີກຫຼາຍແຫ່ງ; ຢ່າງໃດກໍດີ, ຍ້ອນຄວາມຕ້ອງການຂອງຕະຫຼາດ, ຈຶ່ງເຮັດໃຫ້ມີປາກົດການລັກລອບລ່າ ແລະ ຄ້າຂາຍສັດປ່າຫວງຫ້າມ ເຊັ່ນ: ງູ, ລີ່ນ, ເຕົ່າ, ກະທິງ (ເມີຍ) ແລະ ເສືອໂຄ່ງ ເກີດຂຶ້ນ. ເພື່ອແກ້ໄຂບັນຫາດັ່ງກ່າວ, ທາງແຂວງໄດ້ຈັດຕັ້ງຄະນະກຳມະການປະສານງານ P-WEN ຂັ້ນແຂວງ ຂຶ້ນຢ່າງເປັນທາງການ ຕາມຂໍ້ຕົກລົງ ເລກທີ 105/ຄປຂ.ຈສ, ລົງວັນທີ 11/02/2026 ເພື່ອເພີ່ມປະສິດທິພາບໃນການບັງຄັບໃຊ້ກົດໝາຍ.

ຕະຫຼອດການດຳເນີນກອງປະຊຸມ, ບັນດາອົງການສືບສວນ-ສອບສວນ ຈາກເຈົ້າໜ້າທີ່ປ່າໄມ້, ຕຳຫຼວດສິ່ງແວດລ້ອມ, ທະຫານ, ພາສີ ແລະ ອົງການໄອຍະການ ໄດ້ຜັດປ່ຽນກັນນຳສະເໜີຜົນການຈັດຕັ້ງປະຕິບັດວຽກງານ ທັງປຶກສາຫາລືຢ່າງກົງໄປກົງມາ ກ່ຽວກັບຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ຈຸດອ່ອນ, ຊ່ອງວ່າງ ແລະ ສິ່ງທ້າທາຍ ໃນຂອດການປະສານງານ, ການເກັບກຳຫຼັກຖານເບື້ອງຕົ້ນ ແລະ ການດຳເນີນຄະດີ.

ໃນກອງປະຊຸມ, ປະທານໄດ້ມີຄຳເຫັນເນັ້ນໜັກເພື່ອຊຸກຍູ້ໃຫ້ທຸກພາກສ່ວນ ເພີ່ມທະວີຄວາມຮັບຜິດຊອບຮ່ວມມືກັນຢ່າງແໜ້ນແກ່ນ ເພື່ອສ້າງກົນໄກການບັງຄັບໃຊ້ກົດໝາຍໃຫ້ມີຄວາມສັກສິດ, ສາມາດສະກັດກັ້ນອາຊະຍາກຳສັດປ່າ ແລະ ປ່າໄມ້ ໃນໄລຍະໃໝ່ ໃຫ້ໄດ້ຢ່າງມີປະສິດທິຜົນ.

(ຂ່າວ-ພາບ: ຈັນທະວີສັກ)

ສປມອ ຕ້ອນຮັບຮອງປະທານຜູ້ປະຈຳການ ຄະນະກຳມະການສົ່ງເສີມການລົງທຶນ

(ສປມອ) - ວັນທີ 3 ກໍລະກົດຜ່ານມາ, ທ່ານ ອາດສະພັງທອງ ສີພັນດອນ ປະທານສະພາປະຊາຊົນ ນະຄອນຫລວງວຽງຈັນ ໄດ້ຕ້ອນຮັບທ່ານ ນາງ ພອນວັນ ອຸທະວົງ ຮອງລັດຖະມົນຕີ, ຮອງປະທານ ຜູ້ປະຈຳການ ຄະນະກຳມະການສົ່ງເສີມການລົງທຶນ (ຄລທ); ເພື່ອລາຍງານແຜນການປະເມີນການຈັດຕັ້ງປະຕິບັດ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ສະບັບເລກທີ 530/ນຍ.

ທ່ານ ອາດສະພັງທອງ ສີພັນດອນ ໄດ້ຕີລາຄາສູງຕໍ່ການແຜນການປະເມີນການຈັດຕັ້ງປະຕິບັດ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນສະບັບເລກທີ 530/ນຍ ທັງໃຫ້ທິດຊີ້ນຳກ່ຽວກັບວຽກງານຈຸດສຸມໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງນະຄອນຫລວງວຽງຈັນ ແລະ ສະພາບພື້ນເດັ່ນຂອງການລົງທຶນພາກເອກະຊົນ ຢູ່ນະຄອນຫຼວງວຽງຈັນ.

ທັງນີ້ເພື່ອສາມາດຕອບສະໜອງ ຄວາມຮຽກຮ້ອງຕ້ອງການຂອງພັກ ແລະ ລັດຖະບານ ໃນການປັບປຸງ ສະພາບແວດລ້ອມ ຂອງການລົງທຶນພາກເອກະຊົນ ໃຫ້ມີຄວາມສະດວກ; ປັບປຸງກົນໄກ ແລະ ຂອດຂັ້ນ ໃຫ້ມີຄວາມໂລ່ງລ່ຽນ, ລວມສູນ ແລະ ວ່ອງໄວຂຶ້ນກວ່າເກົ່າ ທັງຖືສຳຄັນການຫັນເປັນທັນສະໄໝຢ່າງເປັນລະບົບຄົບຊຸດ ໂດຍສະເພາະການເຊື່ອມໂຍງຖານຂໍ້ມູນວຽກງານລົງທຶນ ເພື່ອເພີ່ມທະວີການຄຸ້ມຄອງຕິດຕາມ ແລະ ກວດກາບັນດາໂຄງການ ທີ່ໄດ້ອະນຸມັດໄປແລ້ວໃຫ້ມີປະສິດທິພາບສູງຂຶ້ນກວ່າເກົ່າ ໂດຍຍົກບົດບາດ ແລະ ຄວາມຮັບຜິດຊອບຂອງທ້ອງຖິ່ນ ໃນການຊຸກຍູ້ຕິດຕາມໂຄງການລົງທຶນຕ່າງໆ ແລະ ສ້າງເງື່ອນໄຂໃຫ້ແກ່ການລົງທຶນຂອງເອກະຊົນພາຍໃນ ແລະຕ່າງປະເທດປະກອບສ່ວນສຳຄັນໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 10 (2026-2030) ຕາມທິດການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ.

ສພຂ ຜົ້ງສາລີ - ລາຍເຈົ້າ ພົບປະສອງຝ່າຍ



(ສພຂ) - ວັນທີ 22 ກໍລະກົດຜ່ານມາທີ່ຫ້ອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ແຂວງ (ສພຂ) ຜົ້ງສາລີ, ໄດ້ມີການພົບປະສອງຝ່າຍລະຫວ່າງ ສພຂ ຜົ້ງສາລີ ແລະ ສພຂ ລາຍເຈົ້າ ແຫ່ງ ສສ.ຫວຽດນາມ; ຝ່າຍລາວນຳໂດຍສະຫາຍ ສົມຈິດ ທັບລະກອນ ກຳມະການປະຈຳພັກແຂວງ, ຮອງປະທານປະຊາຊົນແຂວງຜົ້ງສາລີ ແລະ ຝ່າຍ ສສ.ຫວຽດນາມ ນຳໂດຍສະຫາຍ ນາງ ເຕີນ ທິ ເກວ ກຳມະການປະຈຳພັກແຂວງ, ຮອງປະທານສະພາປະຊາຊົນ ແຂວງລາຍເຈົ້າ ແຫ່ງ ສສ ຫວຽດນາມ; ມີຄະນະຜູ້ແທນທັງສອງຝ່າຍເຂົ້າຮ່ວມ.

ໃນພົບປະສອງຝ່າຍໄດ້ຜັດປ່ຽນກັນລາຍງານສະພາບການເຄື່ອນໄຫວຂອງສະພາປະຊາຊົນຂອງຕົນ ແລະ ແລກປ່ຽນບົດຮຽນເຊິ່ງກັນແລະກັນ ເພື່ອຮັດແໜ້ນ ແລະ ເສີມຂະຫຍາຍມູນເຊື້ອອັນດີງາມແຫ່ງສາຍພົວພັນມິດຕະພາບ, ຄວາມສາມັກຄີແບບພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ, ຫວຽດນາມ-ລາວ ເວົ້າລວມ, ເວົ້າສະເພາະ ລະຫວ່າງ ສອງ ສພຂ ທັງເປັນການເສີມຂະຫຍາຍສາຍພົວພັນຮ່ວມມື ລະຫວ່າງອົງການອຳນາດລັດຂັ້ນທ້ອງຖິ່ນ ກໍຄືອົງການຕົວແທນແຫ່ງສິດແລະຜົນປະໂຫຍດຂອງປະຊາຊົນຂອງສອງຝ່າຍ ໃຫ້ມີຄວາມແໜ້ນແຟ້ນຍິ່ງຂຶ້ນ ທັງສ້າງເງື່ອນໄຂໃຫ້ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ຄະນະກຳມະການ ແລະ ທ້ອງວ່າການສະພາປະຊາຊົນແຂວງ ໄດ້ພົບປະແລກປ່ຽນບົດຮຽນກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະຜູ້ແທນສະພາປະຊາຊົນຂັ້ນທ້ອງຖິ່ນເພື່ອສືບຕໍ່ການພົວພັນຮ່ວມມືແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ໃນຂົງເຂດນິຕິບັນຍັດຂັ້ນທ້ອງຖິ່ນ ໃນຕະຫຼອດໄລຍະຜ່ານມາ.

(ແກ້ວສະຫວ່າງ ໄຊຍະເງິນ)

ກອງປະຊຸມວິສາມັນຂອງຄະນະປະຈຳ ສພຂ

(ສພຂ) - ກອງປະຊຸມວິສາມັນຂອງຄະນະປະຈຳສະພາປະຊາຊົນແຂວງອຸດົມໄຊ ໄດ້ດຳເນີນຂຶ້ນໃນວັນທີ 17 ກໍລະກົດຜ່ານມາທີ່ຫ້ອງປະຊຸມສະພາປະຊາຊົນແຂວງ, ໂດຍການເປັນປະທານຂອງທ່ານ ນາງ ຄຳໝັ້ນ ແກ້ວບຸນຫວນ ກຳມະການປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີທ່ານ ວິງສະຫວັນ ໄຊຍະວົງ ຮອງເລຂາພັກແຂວງ, ປະທານຄະນະກຳມະການປົກຄອງແຂວງ; ມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ຫົວໜ້າພະແນກການກ່ຽວຂ້ອງ, ຮອງປະທານຄະນະກຳມະການ, ຄະນະຫ້ອງວ່າການແຂວງ ແລະ ວິຊາການຂະແໜງກ່ຽວຂ້ອງ ເຂົ້າຮ່ວມ.

ກອງປະຊຸມ, ໄດ້ຄົ້ນຄວ້າພິຈາລະນາ ແລະ ຮັບຮອງເອົາໜັງສືສະເໜີຂອງປະທານຄະນະກຳມະການປົກຄອງແຂວງ ສະບັບເລກທີ 930/ຄປຂ, ລົງວັນທີ 10 ກໍລະກົດ 2026 ເພື່ອຂໍພິຈາລະນາອອກມະຕິຮັບຮອງການຫັນປ່ຽນປະເພດທີ່ດິນກະສິກຳມາເປັນດິນປຸກສ້າງທີ່ຢູ່ອາໄສຢູ່ເມືອງໄຊ, ເມືອງຫຼາ, ເມືອງຮຸນ ແລະ ໜັງສືສະເໜີ ສະບັບເລກທີ 937/ຄປຂ, ລົງວັນທີ 10 ກໍລະກົດ 2026 ວ່າດ້ວຍການຂໍຈັດກອງປະຊຸມເພື່ອຜ່ານແຜນຄຸ້ມຄອງທີ່ດິນ ແລະ ປ່າໄມ້ ຢູ່ເມືອງໄຊ ແລະ ເມືອງນາໝໍ້ ທີ່ຖືກໂຄງການພະລັງງານໄຟຟ້າແສງຕາເວັນຂອງບໍລິສັດ ໄຟຟ້າ CGN ລາວຕາເວັນ ຈຳກັດ; ພ້ອມນັ້ນ, ຍັງໄດ້ສືບຕໍ່ປຶກສາຫາລື ວຽກງານທີ່ຈຳເປັນ ແລະ ຮີບດ່ວນອີກຈຳນວນໜຶ່ງ ຕື່ມອີກ.

ປະກາດການຈັດຕັ້ງ ພາຍໃນຫ້ອງວ່າການ ສພຂ

(ສພຂ) - ວັນພຸດທີ 15 ກໍລະກົດຜ່ານມາ, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ໄດ້ພິທີປະກາດການຈັດຕັ້ງພາຍໃນຫ້ອງວ່າການສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ທອງຄານ ວັດສະດາກອນ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ;ເຂົ້າຮ່ວມມີທ່ານ ຄຳຈັນ ວ່າປົວແສງ ກຳມະການພັກແຂວງ,ເລຂາໜ່ວຍພັກສະພາປະຊາຊົນແຂວງ; ມີຄະນະປະຈຳສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການ, ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານພາຍໃນ ສະພາປະຊາຊົນແຂວງ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີໄດ້ຮັບຟັງມະຕິຕົກລົງຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການແບ່ງຄວາມຮັບຜິດຊອບ ຂອງຄະນະຫ້ອງວ່າການສະພາປະຊາຊົນແຂວງຄື: 1. ທ່ານ ຄຳຈັນ ວ່າປົວແສງ ກຳມະການພັກແຂວງ, ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ຮັບຜິດຊອບຊີ້ນຳລວມ, ລົງເລິກຊີ້ນຳວຽກງານການເມືອງ-ແນວຄິດແລະວຽກງານຈັດຕັ້ງ-ກວດກາ; 2. ທ່ານ ວິງສີ ບຸນທິໃຈ ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ຮັບຜິດຊອບຊີ້ນຳວຽກງານບໍລິຫານ-ການເງິນ ແລະ ພິທີການ ແລະ 3. ທ່ານ ສົມພອນ ນາວຣິວ່າງ ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ຮັບຜິດຊອບຊີ້ນຳວຽກງານຄົ້ນຄວ້າ ສັງລວມ ແລະ ຂໍ້ມູນຂ່າວສານ; ມະຕິຕົກລົງ ຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການແຕ່ງຕັ້ງຫົວໜ້າ, ຮອງຫົວໜ້າຂະແໜງ;ການສັບຊ້ອນໜ້າທີ່ ແລະ ບ່ອນປະຈຳການ ຂອງພະນັກງານ-ລັດຖະກອນ ພາຍໃນ ສະພາປະຊາຊົນແຂວງ.

ຈາກນັ້ນ, ໄດ້ມອບມະຕິຕົກລົງໃຫ້ຜູ້ທີ່ຖືກແຕ່ງຕັ້ງຢ່າງເປັນທາງການ.

ມອບ-ຮັບພາຫະນະ ປະກອບສ່ວນຊຸກຍູ້ ຮັບໃຊ້ວຽກງານ ສພຂ ຄຳມ່ວນ

(ສພຂ)-ໃນວັນທີ6ສິງຫາຜ່ານມາ, ທີ່ນະຄອນຫຼວງວຽງຈັນ ໄດ້ມີພິທີມອບ-ຮັບລົດກະບະ ຍີ່ຫໍ້ TOYOTA HILUX REVO ຈຳນວນ 1 ຄັນ ລວມມູນຄ່າ 45 ພັນໂດລາ ລະຫວ່າງບໍລິສັດ ຄຳມ່ວນ ການລົງທຶນ ຈຳກັດຜູ້ດຽວ ໃຫ້ສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ເພື່ອປະກອບສ່ວນຊຸກຍູ້ຮັບໃຊ້ວຽກງານສະພາປະຊາຊົນແຂວງ; ມອບໂດຍທ່ານ ບຸນປະກອບ ພົນຫາລາດ ຕາງໜ້າບໍລິສັດ ຄຳມ່ວນ ການລົງທຶນ ຈຳກັດຜູ້ດຽວ ແລະ ຮັບໂດຍທ່ານ ປອ. ແກ້ວອຸດອນ ຂຸດສິງຂອນ ກຳມະການປະຈຳພັກແຂວງ, ຮອງປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ຮອງປະທານສະພາປະຊາຊົນຂັ້ນແຂວງ ໂດຍມີພາກສ່ວນທີ່ກ່ຽວຂ້ອງຂອງທັງສອງຝ່າຍເຂົ້າຮ່ວມເປັນສັກຂີພິຍານ.

ໂອກາດນີ້, ທ່ານ ປອ. ແກ້ວອຸດອນ ບຸດສິງຂອນ ຕາງໜ້າໃຫ້ສະພາປະຊາຊົນແຂວງ ຄຳມ່ວນ ໄດ້ສະແດງຄວາມຂອບໃຈເປັນຢ່າງສູງ ມາຍັງບໍລິສັດ ແລະ ຄະນະອຳນວຍການ ທີ່ໄດ້ໃຫ້ການອຸປະຖຳຊ່ວຍເຫຼືອໃນຄັ້ງ ເຊິ່ງຈະໄດ້ນຳເອົາພາຫະນະດັ່ງກ່າວ ໄປຮັບໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານວິຊາສະເພາະ ໃຫ້ເກີດປະໂຫຍດສູງສຸດ ແລະ ສາມາດນຳໃຊ້ໃຫ້ໄດ້ຢ່າງຍາວນານ.

ໃນໄລຍະຜ່ານມາ, ບໍລິສັດດັ່ງກ່າວຍັງໄດ້ໃຫ້ຄວາມສຳຄັນປະກອບສ່ວນຊ່ວຍເຫຼືອສັງຄົມ ແລະ ປະກອບສ່ວນເຂົ້າໃນວຽກງານຂອງແຂວງຄຳມ່ວນຢ່າງຕັ້ງໜ້າ ເປັນຕົ້ນແມ່ນວຽກງານແກ້ໄຂຄວາມທຸກຍາກຂອງປະຊາຊົນ ໃນນັ້ນໄດ້ສົມທົບທຶນສ້າງເຮືອນໃຫ້ປະຊາຊົນຢູ່ບ້ານ ມະກາ ເມືອງນາກາຍ, ບ້ານຕະລໍ ເມືອງບໍ່ວລະພາ ແລະ ປະກອບສ່ວນເຂົ້າໃນວຽກງານອື່ນໆ ທີ່ສຳຄັນຂອງແຂວງແລະເມືອງ.

(ອາລີ)

ສພຂ ຄຳມ່ວນ ເຄື່ອນໄຫວຢ້ຽມຢາມ ແລະ ມອບເຄື່ອງຊ່ວຍເຫຼືອ ຢູ່ເມືອງຫີນບູນ

(ສພຂ)-ໃນວັນທີ2ສິງຫາຜ່ານມາ, ທ່ານ ປອ. ແກ້ວອຸດອນບຸດສິງຂອນ ກຳມະການປະຈຳພັກແຂວງ, ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ (ສພຂ) ຄຳມ່ວນ ພ້ອມດ້ວຍຄະນະປະຈຳ ສພຂ, ຄະນະຫ້ອງວ່າການສະພາປະຊາຊົນແຂວງ ແລະ ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງ ປະຈຳເຂດເລືອກຕັ້ງເມືອງຫີນບູນ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ມອບເຄື່ອງບໍລິໂພກ ໃຫ້ແກ່ປະຊາຊົນຜູ້ປະສົບໄຟໄໝ້ຖ້ວມຢູ່ບ້ານນາຄຳ ເມືອງຫີນບູນ ເຊິ່ງໄດ້ຮັບການຕ້ອນຮັບຈາກທ່ານ ນິກອນ ຄຸດມະນີ ຮອງເລຂາພັກເມືອງ, ປະທານຄະນະກຳມະການປົກຄອງເມືອງ ພ້ອມດ້ວຍອຳນາດການປົກຄອງເມືອງ, ຄະນະຕາແສງໂພນຕ້ອ ແລະ ປະຊາຊົນພາຍໃນບ້ານ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນການເຄື່ອນໄຫວ, ໄດ້ຮັບຟັງການລາຍງານຈາກຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງເຊິ່ງໃຫ້ຮູ້ວ່າ: ສາເຫດຂອງໄພນ້ຳຖ້ວມເກີດຈາກຝົນຕົກໜັກຕິດຕໍ່ກັນຫຼາຍວັນເຮັດໃຫ້ລະດັບນ້ຳຫີນບູນ, ນ້ຳຂອງເພີ່ມຂຶ້ນ ໄຫຼຖ້ວມບ້ານເຮືອນປະຊາຊົນ ຈຳນວນ 36 ບ້ານ, ມີຄອບຄົວທີ່ໄດ້ຮັບຜົນກະທົບທັງໝົດ 2.319 ຄອບຄົວ, ເນື້ອທີ່ນາປີທີ່ຖືກນ້ຳຖ້ວມ 2.005 ເຮັກຕາ, ເສຍຫາຍ 1.135 ເຮັກຕາ, ເນື້ອທີ່ປູກມັນຕົ້ນທີ່ໄດ້ຮັບຜົນກະທົບ 45,8 ເຮັກຕາ, ເສຍຫາຍ 24 ເຮັກຕາ, ເນື້ອທີ່ສວນຢາງພາລາໄດ້ຮັບຜົນກະທົບ 9 ເຮັກຕາ, ເສຍຫາຍ 0,5 ເຮັກຕາ; ໃນນັ້ນ ມີ 5 ບ້ານທີ່ໄດ້ຮັບຜົນກະທົບໜັກຄື: ບ້ານນາເຕີຍ, ໜອງດົງ, ໂພນເໝັ້ນ, ນາໂພ ແລະ ນາຄຳບໍ່ ລວມທັງໝົດ 621 ຄອບຄົວ ແລະ ນ້ຳຖ້ວມເຮືອນຂອງປະຊາຊົນ ກວມເອົາ 2 ບ້ານຄື: ບ້ານນາຄຳບໍ່ ແລະ ບ້ານນາໂພ ມີ 318 ຄອບຄົວ ທີ່ໄດ້ຮັບຜົນກະທົບ.

ທ່ານ ປອ. ແກ້ວອຸດອນ ບຸດສິງຂອນ ຕາງໜ້າຄະນະປະຈຳ ສພຂ ໄດ້ມອບເຄື່ອງອຸປະໂພກ-ບໍລິໂພກ ໃຫ້ອຳນາດການປົກຄອງເມືອງ ເພື່ອນຳໄປແຈກຢາຍໃຫ້ປະຊາຊົນທີ່ໄດ້ຮັບຜົນກະທົບໃນຄັ້ງນີ້ ປະກອບມີ: ເຂົ້າສານ 1 ໂຕນ, ປາກະປ໋ອງ 110 ແພັກ, ໄຂ່ 100 ແຕະ, ໝີ່ 66 ແກັດ, ນ້ຳດື່ມ 200 ແພັກ ລວມມູນຄ່າ 45 ລ້ານກວ່າກີບ. ພ້ອມດຽວກັນນັ້ນ, ທ່ານຍັງໄດ້ມີຄຳເຫັນໂອ້ລົມ ແລະ ຊີ້ນຳໃຫ້ອຳນາດການປົກຄອງເມືອງ ຕະຫຼອດຮອດພາກສ່ວນທີ່ກ່ຽວຂ້ອງ ຈົ່ງເພີ່ມທະວີການຕິດຕາມກວດກາສະພາບຕົວຈິງຢ່າງໃກ້ຊິດ ກ່ຽວກັບບັນຫາຜົນກະທົບທາງດ້ານຕ່າງໆ ເປັນຕົ້ນແມ່ນສັດລ້ຽງ ແລະ ຜົນລະປູກຂອງປະຊາຊົນ ເພື່ອຊອກຫາວິທີແກ້ໄຂຢ່າງທັນການ.

ປະກາດການຈັດຕັ້ງ ແລະ ຫ້ອງການ ຄສຂ ປະຈຳເຂດເລືອກຕັ້ງເມືອງໄຊບົວທອງ

(ສພຂ)-ວັນທີ 5 ສິງຫາຜ່ານມາ, ທີ່ສະໂມສອນເມືອງໄຊບົວທອງ ແຂວງຄຳມ່ວນ ໄດ້ມີພິທີປະກາດການຈັດຕັ້ງ ແລະ ຫ້ອງການຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງໄຊບົວທອງ ໂດຍການເປັນປະທານຂອງທ່ານ ນາງ ກຽມຕາ ວັນມະນາ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງຄຳມ່ວນ ໃຫ້ກຽດເຂົ້າຮ່ວມໂດຍທ່ານ ສາຍ ຄຳພະໄຊສິດທິເດດ ກຳມະການປະຈຳພັກແຂວງ, ຫົວໜ້າຄະນະຈັດຕັ້ງແຂວງ ທັງເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງແຂວງຄຳມ່ວນ, ເຂົ້າຮ່ວມມີສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ, ຕາງໜ້າຄະນະຫ້ອງວ່າການສະພາປະຊາຊົນແຂວງ, ການນຳຂັ້ນເມືອງ, ຫ້ອງການອ້ອມຂ້າງເມືອງ, ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄະນະຕາແສງ ຕະຫຼອດຮອດພະນັກງານລັດຖະກອນເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ຕາງໜ້າຫ້ອງວ່າການສະພາປະຊາຊົນແຂວງ ໄດ້ຜ່ານມະຕິຂອງຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ, ສະບັບເລກທີ 173/ຄປຈ.ສພຂ, ລົງວັນທີ 2 ກໍລະກົດ 2026, ວ່າດ້ວຍການສ້າງຕັ້ງຫ້ອງການຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກເມືອງ ແລະ ມະຕິຂອງຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ສະບັບເລກທີ 171/ຄປຈ.ສພຂ, ລົງວັນທີ 2 ກໍລະກົດ 2026, ວ່າດ້ວຍການແຕ່ງຕັ້ງທ່ານ ປອ. ສົມນະສອນ ແສງຈັນທະວົງ ເປັນຫົວໜ້າ ແລະ ທ່ານ ນາງ ວິໄລພອນ ພັນທະວົງ ເປັນຮອງຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງໄຊບົວທອງ ທັງເປັນຫົວໜ້າຫ້ອງການ. ຈາກນັ້ນ, ປະທານກອງປະຊຸມ ໄດ້ມອບມະຕິແຕ່ງຕັ້ງດັ່ງກ່າວໃຫ້ແກ່ຫົວໜ້າ ແລະ ຮອງຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ.

ໃນຕອນທ້າຍຂອງພິທີ, ທ່ານຮອງປະທານສະພາປະຊາຊົນແຂວງ ໄດ້ສະແດງຄວາມຊົມເຊີຍຕໍ່ບັນດາທ່ານທີ່ຖືກແຕ່ງຕັ້ງ ພ້ອມທັງເນັ້ນໜັກໃຫ້ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ຈົ່ງເອົາໃຈໃສ່ຕໍ່ວຽກງານການເມືອງ-ແນວຄິດ, ຄົ້ນຄວ້າກຳແໜ້ນແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ມະຕິຕ່າງໆ ເພື່ອນຳໄປຜັນຂະຫຍາຍຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ສອດຄ່ອງ; ຕ້ອງກຳແໜ້ນກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງໃຫ້ເລິກເຊິ່ງໂດຍສະເພາະ 3 ພາລະບົດບາດ. ພ້ອມດຽວກັນນັ້ນ ຕ້ອງປະສານສົມທົບ ແລະ ຮ່ວມມືຢ່າງໃກ້ສິດກັບອົງການປົກຄອງເມືອງ, ຕາແສງ, ບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຕິດຕາມການຈັດຕັ້ງຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມ ຢູ່ພາຍໃນເຂດເລືອກຕັ້ງຂອງຕົນໃຫ້ປາກົດຜົນເປັນຈິງ.

ຕິດຕາມມະຕິກອງປະຊຸມ ສພຂ ວ່າດ້ວຍ ການຮັບຮອງແຜນການສ້າງ ແລະ ປັບປຸງນິຕິກຳ

(ສພຂ) - ວັນທີ 1 ກໍລະກົດຜ່ານມາ, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ໄດ້ມີກອງປະຊຸມຕິດຕາມມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາແຜນການສ້າງແລະປັບປຸງນິຕິກຳໃຕ້ກົດໝາຍ ຂອງຄະນະກຳມະການປົກຄອງແຂວງ 5 ປີ (2026-2030) ໂດຍການເປັນປະທານຮ່ວມຂອງທ່ານ ສີສະຫວາດ ເພັງທະລັງສີ ຄະນະປະຈຳສະພາປະຊາຊົນແຂວງ, ຮອງປະທານສະພາປະຊາຊົນແຂວງ; ທ່ານ ທອງໃສ ໄຊຍະວົງຄຳດີ ຮອງຄະນະກຳມະການປົກຄອງແຂວງ; ເຂົ້າຮ່ວມມີບັນດາທ່ານປະທານ, ຮອງປະທານຄະນະກຳມະການ, ຮອງຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ, ຕາງໜ້າຈາກບັນດາພະແນກການ, ກອງບັນຊາການ ປກສ ແຂວງ, ບັນດາຫົວໜ້າ-ຮອງຫົວໜ້າຂະແໜງແລະວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຟັງການລາຍງານຄືນກ່ຽວກັບແຜນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ທີ່ຈະນຳເຂົ້າພິຈາລະນາ ແລະ ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 2-9 ຂອງສະພາປະຊາຊົນແຂວງ ຊຸດທີ V ເຊິ່ງມີນິຕິກຳທັງໝົດ 21 ສະບັບ ສ້າງໃໝ່ 14 ແລະ ປັບປຸງ 7 ສະບັບ ແລະ ຮັບຟັງການລາຍງານໂດຍສັງເຂບກ່ຽວກັບຄວາມຄືບໜ້າໃນການສ້າງແລະປັບປຸງນິຕິກຳໃຕ້ກົດໝາຍ ຈາກບັນດາພະແນກ ແລະ ກົມກອງທີ່ມີແຜນການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ, ພາຍຫຼັງທີ່ໄດ້ຮັບຟັງການລາຍງານແລ້ວ ປະທານກອງປະຊຸມໄດ້ມີຄຳເຫັນໃຫ້ບັນດາພະແນກການທີ່ມີຄວາມພ້ອມໃນການສ້າງນິຕິກຳໃຕ້ກົດໝາຍ, ໂດຍເລືອກເຟັ້ນເອົາຫົວຂໍ້ທີ່ມີຄວາມຈຳເປັນໃນສັງຄົມ, ການແກ້ໄຂປາກົດການຫຍໍ້ທໍ້ ເປັນບຸລິມະສິດໃນການຈັດຕັ້ງປະຕິບັດ, ເພື່ອນຳເອົາຮ່າງນິຕິກຳໃຕ້ກົດໝາຍເຂົ້າພິຈາລະນາ, ຮັບຮອງເອົາໃນກອງປະຊຸມສະໄໝສາມັນຂອງສະພາປະຊາຊົນແຂວງ ຊຸດທີ V ແຕ່ລະເທື່ອໃຫ້ມີເນື້ອໃນຄົບຖ້ວນ ແລະທັນຕາມກຳນົດເວລາພ້ອມທັງຮັບປະກັນຄວາມຖືກຕ້ອງຕາມບາດກ້າວ ແລະ ຂັ້ນຕອນຂອງການສ້າງນິຕິກຳທີ່ກົດໝາຍກຳນົດໄວ້.

ເສີຍແຕ່...

(ຕໍ່ຈາກໜ້າ 1)

ປະທານກຳມາທິການເສດຖະກິດ ແລະ ການເງິນ (ກສງ); ເຂົ້າຮ່ວມມີທ່ານ ພູລຳພອນ ສີຫາວົງ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງສະຫວັນນະເຂດ, ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ທີ່ເປັນກຳມະການຂອງ ກສງ ທີ່ມາຈາກ 6 ແຂວງຄື: ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ຈຳປາສັກ, ເຊກອງ ແລະ ອັດຕະປື ພ້ອມດ້ວຍພາກສ່ວນກ່ຽວຂ້ອງ ແລະ ແຂກຖືກເຊີນ.

ກອງປະຊຸມໄດ້ສະເໜີເນື້ອໃນຄວາມຮູ້ພື້ນຖານກ່ຽວກັບເສດຖະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ, ການຄຸ້ມຄອງ-ບໍລິຫານ ແລະ ການຕິດຕາມກວດກາວຽກງານດັ່ງກ່າວ ແນໃສ່ສ້າງເງື່ອນໄຂໃຫ້ວິທະຍາກອນ ແລະ ສຳມະນາກອນ ໄດ້ມີການຄົ້ນຄວ້າ ແລະ ແລກປ່ຽນບົດຮຽນຮ່ວມກັນ ເພື່ອເຂົ້າໃຈບັນຫາ ໃຫ້ເລິກເຊິ່ງ ແລະ ສາມາດນຳເອົາບົດຮຽນເຫຼົ່ານີ້ ໄປຜັນຂະຫຍາຍ ແລະ ນຳໃຊ້ໃນພາກປະຕິບັດຕົວຈິງໃຫ້ໄດ້ຮັບໝາກຜົນຢ່າງແທ້ຈິງ.

ທ່ານ ຈັນທະບຸນ ສຸກອາລຸນ ກ່າວວ່າ: ກອງປະຊຸມຄັ້ງນີ້ ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈ ຕໍ່ການປະຕິບັດພາລະບົດບາດທີ່ສຳຄັນຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນຂັ້ນແຂວງ ໃນຖານະເປັນອົງການນິຕິບັນຍັດ, ເປັນອົງການພິຈາລະນາບັນຫາສຳຄັນຂອງຊາດແລະເປັນອົງການຕິດຕາມກວດກາການປະຕິບັດໜ້າທີ່ຂອງອົງການບໍລິຫານ ໂດຍສະເພາະແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ເຊິ່ງຖືເປັນວຽກໜຶ່ງທີ່ສຳຄັນ ແລະ ເປັນເສັ້ນເລືອດໃຫຍ່ທັງເປັນປັດໄຈຕັດສິນຊີ້ຂາດຕໍ່ການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາ ແລະ ສ້າງຄວາມເຂັ້ມແຂງ, ຍົກລະດັບຄວາມຮູ້, ພັດທະນາທັກສະການວິເຄາະວິໄຈ ເພື່ອຕິດຕາມມະຕິ ແລະ ສາມາດຕັ້ງຄຳຖາມຕໍ່ອົງການບໍລິຫານ ແລະ ການສ້າງຄວາມເປັນມືອາຊີບ ໃຫ້ແກ່ ສສຊ ແລະ ສສຂ; ທ່ານກ່າວຕື່ມວ່າ: ເອກະສານໄດ້ຜ່ານການຄົ້ນຄວ້າ, ຮຽບຮຽງ ແລະ ກັ່ນຕອງຢ່າງລະອຽດຖີ່ຖ້ວນພໍສົມຄວນ ຈາກຄະນະຮັບຜິດຊອບ ແລະ ຜູ້ຊ່ຽວຊານ ເຊິ່ງໄດ້ກຳນົດຂອບເຂດສິດ, ໜ້າທີ່, ຫຼັກການ ເຮັດວຽກ ຕະຫຼອດຮອດຂັ້ນ

ມອບ-ຮັບໜ້າທີ່ຫົວໜ້າ ຄສຂ ປະຈຳ ເຂດເລືອກຕັ້ງເມືອງສະໜາມໄຊ

(ສພຂ) - ເມືອງສະໜາມໄຊ ໄດ້ຈັດພິທີປະກາດໂຄງປະກອບການຈັດຕັ້ງ, ບຸກຄະລະກອນ ແລະ ມອບ-ຮັບໜ້າທີ່ລະຫວ່າງຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດ (ຄສຂ) ເລືອກຕັ້ງເມືອງ (ຜູ້ເກົ່າ ແລະ ຜູ້ໃໝ່) ຢ່າງເປັນທາງການ, ໃນວັນທີ 1 ກໍລະກົດນີ້ຜ່ານມາ, ທີ່ສະໂມສອນເມືອງ, ໂດຍການເຂົ້າຮ່ວມຂອງທ່ານ ພູວັນ ພົມມະຈັນ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ; ມີທ່ານ ພັທ. ຄຳໂພໄຊ ໄຊຍະເສນາ ກຳມະການພັກແຂວງ, ເລຂາພັກເມືອງສະໜາມໄຊ; ບັນດາທ່ານການນຳຂອງເມືອງ, ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ທ່ານ ນາງ ພູດອນ ຈຸມມະລີ ຮອງເລຂາພັກເມືອງ, ຫົວໜ້າຄະນະຈັດຕັ້ງເມືອງສະໜາມໄຊ ໄດ້ຂຶ້ນຜ່ານມະຕິຄະນະປະຈຳສະພາປະຊາຊົນແຂວງສະບັບເລກທີ 63/ຄປຈ, ລົງວັນທີ 5 ມິຖຸນາ 2026 ວ່າດ້ວຍການຮັບຮອງເອົາໂຄງປະກອບການຈັດຕັ້ງ, ບຸກຄະລາກອນສະພາປະຊາຊົນແຂວງ ຊຸດທີ V ປະຈຳເຂດເລືອກຕັ້ງເມືອງ, ໃນນັ້ນປະກອບມີ:

1. ທ່ານ ພັທ ຄຳໂພໄຊ ໄຊຍະເສນາ ກຳມະການພັກແຂວງ, ເລຂາພັກເມືອງສະໜາມໄຊ, ສສຂ ປະຈຳເຂດເລືອກຕັ້ງເມືອງ ເປັນຫົວໜ້າຄະນະ;

2. ທ່ານ ຄຳສິນ ສອນຈັນມາ ກຳມະການພັກເມືອງ, ສສຂ ປະຈຳເຂດເລືອກຕັ້ງເມືອງ ເປັນຮອງຫົວໜ້າຄະນະ, ທັງເປັນຫົວໜ້າຫ້ອງການຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ;

3. ທ່ານ ພົງສະຫວັນ ພົມມະວົງ ສສຂ ປະຈຳເຂດເລືອກຕັ້ງເມືອງ ເປັນຄະນະກຳມະການ;

4. ທ່ານ ພອນໄຊ ອິນທິວົງ ກຳມະການພັກເມືອງ, ສສຂ ປະຈຳເຂດເລືອກຕັ້ງເມືອງ ເປັນຄະນະກຳມະການ;

5. ທ່ານ ນ. ສິ່ງຄຳ ໂລຫະສານ ສສຂ ປະຈຳເຂດເລືອກຕັ້ງເມືອງເປັນຄະນະກຳມະການ.

ຈາກນັ້ນ, ໃນພິທີກໍໄດ້ມີການລົງນາມເຊັນປິດບັນທຶກມອບ-ຮັບໜ້າທີ່ຢ່າງເປັນທາງການ ລະຫວ່າງ ທ່ານ ຄຳໝັ້ນ ພົມມະແສງ ຫົວໜ້າຄະນະ ສສຂ ຊຸດທີ IV ປະຈຳເຂດເລືອກຕັ້ງເມືອງ (ຜູ້ເກົ່າ) ແລະ ທ່ານ ພັທ. ຄຳໂພໄຊ ໄຊຍະເສນາ ຫົວໜ້າຄະນະ ສສຂ ຊຸດທີ V ປະຈຳເຂດເລືອກຕັ້ງເມືອງ (ຜູ້ໃໝ່) ໂດຍຊ່ອງໜ້າຮອງປະທານສະພາປະຊາຊົນແຂວງ ແລະ ບັນດາທ່ານຜູ້ເຂົ້າຮ່ວມເປັນສັກຂີພິຍານ.

ໃນຕອນທ້າຍ, ທ່ານ ພູວັນ ພົມມະຈັນ ໄດ້ມີທິດຊີ້ນຳ ແລະ ໂອ້ລົມ ໂດຍໄດ້ຍ້ອງຍໍຊົມເຊີຍຜົນງານຂອງຄະນະ ສສຂ ປະຈຳເຂດເລືອກຕັ້ງເມືອງ ຊຸດເກົ່າ ແລະ ເນັ້ນໜັກໃຫ້ຄະນະ ສສຂ ປະຈຳເຂດເລືອກຕັ້ງເມືອງ ຊຸດໃໝ່ ເອົາໃຈໃສ່ບາງວຽກງານຈຸດສຸມ ເປັນຕົ້ນ: ຍົກສູງຄວາມຮັບຜິດຊອບທາງການເມືອງ, ເສີມຂະຫຍາຍຄວາມສາມັກຄີພາຍໃນໃຫ້ເປັນປຶກແຜ່ນ ແລະເປັນແບບຢ່າງທີ່ດີໃນການປະຕິບັດກົດໝາຍ, ຮັດແໜ້ນການປະສານສົມທົບ ພົວພັນຮ່ວມມືຢ່າງກົມກຽວກັບອົງການປົກຄອງເມືອງ ເພື່ອຮ່ວມກັນຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ, ຫັນປ່ຽນກົນໄກການເຮັດວຽກໃຫ້ມີວິທະຍາສາດ, ວ່ອງໄວ, ໂປ່ງໃສ ແລະ ມີປະສິດທິຜົນສູງ, ໃກ້ຊິດຕິດແທດຣາກຖານ, ຮັບຟັງ ແລະ ນຳເອົາຄວາມມຸ່ງມາດປາດຖະໜາຂອງປະຊາຊົນເມືອງສະໜາມໄຊ ໄປສະເໜີຕໍ່ສະພາປະຊາຊົນແຂວງ ເພື່ອຄົ້ນຄວ້າແກ້ໄຂໃຫ້ທັນການ.

(ວິນັດ)

ປະກາດ...

(ຕໍ່ຈາກໜ້າ 1)

ທານສະພາປະຊາຊົນແຂວງ (ສພຂ); ຄະນະປະຈຳ ແລະ ກຳມະການພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ, ສະ ມາຊິກສະພາປະຊາຊົນແຂວງ (ສສຂ), ພະແນກການອ້ອມຂ້າງ, ຄະນະຫ້ອງວ່າການ ແລະ ພະນັກງານເສນາທິການຂອງ ສພຂ 3 ແຂວງດັ່ງກ່າວ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ບັນດາທ່ານເລຂາພັກແຂວງ ໄດ້ລາຍງານສະພາບການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ (ຄສຊ) ປະຈຳເຂດເລືອກຕັ້ງ. ຫຼັງຈາກນັ້ນ, ຕາງໜ້າຫ້ອງວ່າການສະພາແຫ່ງຊາດ ໄດ້ອ່ານມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 191/ຄປຈ, ລົງວັນທີ 08/7/2026 ວ່າດ້ວຍການແຕ່ງຕັ້ງທ່ານ ສອນທະນູ ທຳມະວົງ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ເປັນປະ

ທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ ແລະ ທ່ານ ໄຊ ອຳພອນ ສີຫາວົງ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ເປັນຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ; ສະບັບເລກທີ 199/ຄປຈ, ລົງວັນທີ 08/7/2026 ວ່າດ້ວຍການແຕ່ງຕັ້ງທ່ານ ໄຊຊະນະ ໂຄດພູທອນ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ເປັນປະ ທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ ແລະ ທ່ານ ແກ້ວອຸດອນ ບຸດສີງ ຂອນ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ເປັນຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ; ສະບັບເລກທີ 185/ຄປຈ, ລົງວັນທີ 08/7/2026 ວ່າດ້ວຍການແຕ່ງຕັ້ງທ່ານ ພິຈອ. ແປ້ນ ຄຳ ບຸດຈັນແພງ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ເປັນປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ ແລະ ທ່ານ ດາ ລິວັນ ພູສະ ຫວັນ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ເປັນຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ.

ໂອກາດເຂົ້າຮ່ວມພິທີປະກາດການຈັດຕັ້ງດັ່ງກ່າວ, ທ່ານ ມອນໄຊ ລາວມີວຊຶ່ງ ໄດ້ຕີລາຄາສູງ ແລະ ສະແດງຄວາມຊົມເຊີຍຕໍ່ຜົນງານ ແລະ ຜົນສຳເລັດຮອບດ້ານຂອງແຂວງພາຍໃຕ້ການນຳພາ-ຊີ້ນຳຂອງຄະນະພັກ, ອຳນາດການປົກຄອງຂອງແຂວງ ທັງສະແດງຄວາມຊົມເຊີຍຕໍ່ບັນດາທ່ານທີ່ໄດ້ຖືກແຕ່ງຕັ້ງເປັນຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະແດງຄວາມເຊື່ອໝັ້ນວ່າ ຈະນຳພາ-ຊີ້ນຳວຽກງານ ຄສຊ ປະຈຳເຂດເລືອກຕັ້ງຂອງຕົນ ໂດຍຕ້ອງມີການວາງແຜນການເຄື່ອນໄຫວເປັນແຕ່ລະໄລຍະ; ມີການສະຫຼຸບຕີລາຄາລາຍງານຂັ້ນເທິງ ໂດຍອີງໃສ່ແຜນການເຄື່ອນໄຫວຂອງ ສພຊ, ຄປຈ ສພຊ ກໍຄືຄະນະພັກແຂວງ ອາວຸໂສ ທັງປະສານສົມທົບກັບ ຄປຈສພຂ ກໍຄືອຳນາດການປົກຄອງແຂວງເພື່ອຄົ້ນຄວ້າຈັດຕັ້ງຜັນຂະຫຍາຍບັນດາແຜນງານ, ໂຄງການ ທີ່ ສພຊ ວາງອອກ ໃນ 5 ປີຕໍ່ໜ້າ ໂດຍໃຫ້ສອດຄ່ອງກັບຈຸດພິເສດ, ຄວາມເປັນຈິງແລະທ່າແຮງຂອງເຂດເລືອກຕັ້ງຂອງຕົນ; ມີກົນໄກການປະສານງານກັບບັນດາກົງຈັກການຈັດຕັ້ງຂອງ ສພຊ ໃນການປະຕິບັດສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ຕາມ 3 ພາລະບົດບາດທີ່ກົດໝາຍກຳນົດໄວ້.

ທ່ານຮອງປະທານສະພາແຫ່ງຊາດ ໄດ້ສະເໜີໃຫ້ອຳນາດການປົກຄອງແຂວງກໍຄືອຳນາດການປົກຄອງທຸກຂັ້ນ, ອົງການຈັດຕັ້ງຂັ້ນແຂວງຈົ່ງໄດ້ໃຫ້ການຮ່ວມມື, ສະໜັບສະໜູນການເຄື່ອນໄຫວຂອງສະພາປະຊາຊົນແຂວງ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ກໍຄືສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງ ດ້ວຍການສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຂອງ ສສຊ -ສສຂ ເພື່ອເຮັດສຳເລັດໜ້າທີ່ໃນການເປັນຕົວແທນແຫ່ງສິດແລະຜົນປະໂຫຍດຂອງປະຊາຊົນໃນເຂດເລືອກຕັ້ງຂອງຕົນ.

(ນາງ ກຸກກົກ ບຸດດາໄຊ)



ກົດໝາຍ

 # ສົມສຸກ ສຸກສະຫວັນ

❋ ອັນວ່າ ກົກແກ່ນເທງົ້າ
ກົດໝາຍຄືໂຄງບິນ
ໂຄງລ່າງເສດຖະກິດຄ້ຳ
ບິນແລະລ່ຳສານສອດກ້ຽວ

❋ ລັດຖະທຳມະນູນເປັນແມ່ເບ້ົາ
ລັດປະຊາທິປະໄຕປະຊາຊົນ
ສິດພັນທະພົນລະເມືອງວາງໄວ້
ລະບອບໃໝ່ໃສ່ສ່ອງແຈ້ງ ມີກົດໝາຍອອກໃຊ້

❋ ໝາຍວ່າລັດສ້າງໃຫ້
ດັດສົມໂດຍກົດໝາຍ
ໂດຍແມ່ນມອນປະຊາເຊື້ອ
ເລືອກຜູ້ແທນເກັ່ງກ້າ

❋ ທຳມະນູນຍັງວ່າໄວ້
ປະຊາມີສິດສຽງ
ຄວາມຜິດກໍລະບຸໃຫ້
ປົກປ້ອງຜູ້ບໍ່ຜິດພາດພັ້ງ

❋ ເນື່ອງຈາກຖືກສ້າງຕັ້ງ
ຂອງປະຊາຊົນລາວ
ເປັນເຄື່ອງມືປົກປ້ອງ
ຈາກປະຊາໂດຍປະຊາ ເພື່ອປະຊາໂດຍທ່ຽງແທ້

❋ ດັ່ງນັ້ນ ຈຶ່ງຮຽກຮ້ອງ
ຊົມໃຊ້ສິດເສລີ
ພິວ່າສິດຫລາຍແລ້ວ
ຜູ້ອື່ນ! ສິດເຂົາມີພຽບພ້ອມ

ຄຸມຄອບສັງຄົມ
ເພື່ອຄົ້ນຮຽນຮູ້
ເໝືອນໂລຫິດໄຫລຕະຫລອດ
ເພື່ອຄວາມເຂັ້ມລັດດຽວ

ກົດໝາຍລູກຫລອມມາ
ສ້າງເຄື່ອງມືນຳໃຊ້
ຢ່າທຳເກີນກາຍຂອບ
ທຸກຄົນໄດ້ນັບຖື

ນິຕິລັດສັງຄົມລາວ
ດັ່ງດຽວດາຖ້ວນ
ວົງສາຄະນາຍາດ
ຕາງໜ້າຢູ່ສະພາ

ໄຂປ່ອງແປງທາງ
ເພື່ອປະຊາເປັນເຈົ້າ
ຫລາຍມາດຕາວາງອອກ
ໃຫ້ຫລຸດພົ້ນຈາກຈ່ອງຈຳ

ຕາມເຈດຕະນາລົ້ມ
ທົ່ວແດນດິນດ້າວ
ດູແລຜົນປະໂຫຍດ
ເຈົ້າຂອງເທງົ້າລັດລາວ

ຕ້ອງເຄົາລົບກົດໝາຍ ຈົ່ງຈັ່ງເມີ!
ທີ່ມີລະບຸໄວ້
ທຳຕາມໃຈກາຍເຂດ
ເພື່ອປົກປ້ອງຖ້ຳລ່ວງເກີນ!

ສັ້ນສັ້ນ ແຊບໆ

(ເລື່ອງເບົາໆ ເຄົ້າແບບກັບເອງ ບ່ເຄັ່ງພິຕີການ)

 # ສຸຊົມທ້ອນ

❋**ຊົມ**ເຊີຍວັນລັດຖະທຳມະນູນແຫ່ງຊາດ ກ້າວມາຄົບຮອບ **35 ປີ** (15 ສິງຫາ 1991-15 ສິງຫາ 2026) ຕາມຍີບຂ່າວຫຼາຍພາກສ່ວນເອົາໃຈໃສ່ສ້າງລະບອບການປະກອບສ່ວນ ສາມສິບຫ້າປີເອກ້ຳ ວັນລັດຖະທຳມະນູນ ປູພື້ນຖານສັງຄົມລາວ ປະກາດມີກົດໝາຍໃຊ້ ໃນຫົ່ວຫາປີແຄ້ວ ແດນລາວເອກະລາດ ລ້ວນແຕ່ຖືກປະກາດໃຊ້ ພາຍໃຕ້ວັນລັດຖະທຳມະນູນ **ບ້ັນບ່ຳ!**

❋ **ຂໍ**ເປັນກຳລັງໃຈໃຫ້ພໍ່ແມ່ປະຊາຊົນລາວບັນດາເຜົ່າທີ່ໄດ້ຮັບຜົນກະທົບຈາກເຫດການນ້ຳຖ້ວມໃນຂອບເຂດຫົ່ວປະເທດ ຢູ່ຫຼາຍພື້ນທີ່ ພາໃຫ້ເກີດມີຄວາມເສຍຫາຍຫຼາຍສົມຄວນ ຈົ່ງຂໍ່ຂຽນຂ່ານຂໍ້ຄວາມສົ່ງມາຫາ ພໍ່ແມ່ປ່ອງປະຊາ ຫົ່ວຫາປີແຄ້ວ ຂໍ່ຈົ່ງອົດທົນສູ້ ກັບອຸປະສັກຍິ່ງໃຫຍ່ ຂໍ່ໃຫ້ໄພພ່ານພົ້ນ ລາວທຸກຄົນຂ່ອຍຂ້ອນ ໃຫ້ລາວພົ້ນພ່ານໄພ **ຕ່ານເອີ!**

ຊອບຍິ້ມ

 # ພົ້ງຄຶ

ເລື່ອງ: ໂອເມກາ 3

ແມ່ຄ້າ: ບ່າວໆ ຊື້ປາຫຼາບ່ໍ? ມີໂອເມກາ 3 ຫຼາຍໄດ ກິນແລ້ວຊິໄດ້ສະຫຼາດໆ

ລູກຄ້າ: ຂາຍຈັ່ງໃດລະ?

ແມ່ຄ້າ: ໂລລະ 30 ພັນກັບ 3 ໂລ 1 ແສນ

ລາວເລີຍຊື້ໄປກິນຫຼາຍເທື່ອເຕີບ; ຫຼາຍມື້ຜ່ານໄປ, ລາວຄິດຢູ່ໃນໃຈວ່າແມ່ຄ້າໄລ່ເງິນຜິດ, ຈຶ່ງກັບໄປໂອຍອາຍແມ່ຄ້າ

ລູກຄ້າ: ແມ່ຄ້າ ເຈົ້າໂກງຂ້ອຍຫວາ? ເຈົ້າໄລ່ເງິນໃຫ້ຂ້ອຍຜິດຫຼາຍເທື່ອແລ້ວ

ລູກຄ້າ: ເຫັບບ່ລະ!!! ໂອເມກາ 3 ເລີ່ມເຮັດວຽກແລ້ວ...



ສຸພາສິດ-ຄະຕິເຕືອນໃຈ

ດອກຫຍ້າ

ຢູ່ໃຫ້ເພີ່ນວ່າດີ ໜີໃຫ້ເພີ່ນຄິດຮອດ

ລັດຖະສະພາຕ່າງປະເທດ

South Sudan ເລີ່ມໂຄສະນາ ກ່ອນການເລືອກຕັ້ງເດືອນທັນວາ

(Xinhua) - ວັນຈັນທີ 27 ກໍລະກົດ 2026, ຄະນະກຳມະການເລືອກຕັ້ງແຫ່ງຊາດ (NEC) ຂອງຊູດັງໃຕ້ ໄດ້ເປີດຕົວການໂຄສະນາໃຫ້ຄວາມຮູ້ແກ່ຜູ້ມີສິດເລືອກຕັ້ງ ແລະ ພົນລະເມືອງທົ່ວປະເທດ ເພື່ອກະກຽມຄວາມພ້ອມໃຫ້ປະຊາຊົນສຳລັບການເລືອກຕັ້ງທົ່ວໄປທີ່ຈະຈັດຂຶ້ນໃນວັນທີ 22 ທັນວານີ້ ເຊິ່ງເປັນສ່ວນໜຶ່ງຂອງຄວາມພະຍາຍາມໃນການປູທາງໄປສູ່ການເລືອກຕັ້ງລະດັບຊາດຄັ້ງທຳອິດຂອງປະເທດ ນັບຕັ້ງແຕ່ໄດ້ຮັບເອກະລາດໃນປີ 2011.

ອາເບດເນໂກ ອາໂກກ ກາຄູໂອລ (Abednego Akok Kacuol) ປະທານ NEC ກ່າວວ່າ ການໂຄສະນານີ້ ມີຈຸດປະສົງເພື່ອແຈ້ງໃຫ້ຜູ້ມີສິດເລືອກຕັ້ງຮູ້ກ່ຽວກັບຂະບວນການລົງທະບຽນ, ຂັ້ນຕອນການລົງຄະແນນສຽງ ແລະ ສິດທິພົນລະເຮືອນຂອງພວກເຂົາ, ພ້ອມທັງສົ່ງເສີມການມີສ່ວນຮ່ວມຢ່າງກວ້າງຂວາງໃນທົ່ວປະເທດ.“ການໂຄສະນານີ້ບໍ່ມີສ່ວນກ່ຽວຂ້ອງກັບພັກການເມືອງໃດໆທັງສິ້ນ ແລະ ຖືກອອກແບບມາເພື່ອຮັບປະກັນວ່າພົນລະເມືອງທີ່ມີສິດທຸກຄົນ ເຂົ້າໃຈຂະບວນການ ແລະ ສາມາດເຂົ້າຮ່ວມໄດ້ຢ່າງມີປະສິດທິພາບ” ອາໂກກ ກ່າວໃນລະຫວ່າງການເປີດຕົວທີ່ນະຄອນຫຼວງຈູບາ (Juba); ເຂົາກ່າວຕື່ມວ່າ ຄະນະກຳມະການຈະໃຫ້ຄວາມສຳຄັນກັບການເຂົ້າເຖິງກຸ່ມຄົນທີ່ດ້ອຍໂອກາດເຊິ່ງມັກຈະປະເຊີນກັບອຸປະສັກໃນການລົງຄະແນນສຽງ ລວມທັງແມ່ຍິງ, ຊາວໜຸ່ມ, ຄົນພິການ ແລະ ຜູ້ອົບພະຍົບພາຍໃນປະເທດ.

ເຈມສ໌ ວານີ ອິກກາ (James Wani Igga) ຮອງປະທານາທິບໍດີ ໄດ້ຮຽກຮ້ອງໃຫ້ພົນລະເມືອງລົງທະບຽນ ແລະ ເຂົ້າຮ່ວມການເລືອກຕັ້ງຢ່າງສັນຕິ, ໂດຍເນັ້ນໜັກວ່າ ທະບຽນຜູ້ມີສິດເລືອກຕັ້ງທີ່ເຊື່ອຖືໄດ້ ມີຄວາມສຳຄັນຫຼາຍສຳລັບການເລືອກຕັ້ງທີ່ເສລີ ແລະ ຍຸຕິທຳ.

ການໂຄສະນານີ້ ຈະດຳເນີນໄປທົ່ວປະເທດ ໂດຍການຮ່ວມມືກັບອົງການຈັດຕັ້ງສັງຄົມພົນລະເຮືອນ, ສື່ມວນຊົນ, ກຸ່ມສາສະໜາ, ພັກການເມືອງ ແລະ ຜູ້ນຳຊຸມຊົນ ເພື່ອເພີ່ມຄວາມຮັບຮູ້ຂອງປະຊາຊົນກ່ອນການເລືອກຕັ້ງໃນເດືອນທັນວາ.



ຮອງປະທານ...

(ຕໍ່ຈາກໜ້າ 1)

ເລືອກຕັ້ງທີ 3 ແຂວງຫຼວງນ້ຳທາ ໃນວັນທີ 3-5 ສິງຫາ 2026 ທີ່ 3 ແຂວງດັ່ງກ່າວຕາມລຳດັບ; ເຂົ້າຮ່ວມມີບັນດາທ່ານ ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ (ສພຂ); ຮອງເລຂາພັກແຂວງ, ປະທານຄະນະກຳມະການປົກຄອງແຂວງ; ຄະນະປະຈຳ ແລະ ກຳມະການພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ); ພະແນກການອ້ອມຂ້າງ, ຄະນະຫ້ອງວ່າການ ແລະ ພະນັກງານ ສພຂ 3 ແຂວງ.

ໃນພິທີ, ໄດ້ຮັບຟັງລາຍງານໂດຍຫຍໍ້ສະພາບລວມ ແລະ ການຈັດຕັ້ງປະຕິບັດພາລະບົດບາດຂອງສະພາປະຊາຊົນແຂວງ ໄລຍະ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2026. ທ່ານ ເຂັມພອນ ອາໂນໄທ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ ໄດ້ຂຶ້ນຜ່ານມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 182/ຄປຈ, ລົງວັນທີ 08/7/26 ວ່າດ້ວຍການແຕ່ງຕັ້ງ ທ່ານ ພິຕ. ສົມພອນ ມົດຕະພອນ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ເປັນປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ ແລະ ທ່ານ ສົມຈິດ ຫັບລະກອນ ເປັນຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ; ສະບັບເລກທີ 184/ຄປຈ, ລົງວັນທີ 08/7/26 ວ່າດ້ວຍການແຕ່ງຕັ້ງທ່ານ ບຸນຄົງ ຫຼ້າຈຽມພອນ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ເປັນປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ ແລະ ທ່ານ ນາງ ຄຳໝັ້ນ ແກ້ວບຸນຫອນ ເປັນຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ; ສະບັບເລກທີ 183/ຄປຈ, ລົງວັນທີ 08/7/26 ວ່າດ້ວຍການແຕ່ງຕັ້ງທ່ານ ພິທ. ຄຳກົ່ງ ຜຸຍຫຼ້າມະນີວົງ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ ເປັນປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 3 ແຂວງຫຼວງນ້ຳທາ. ຈາກນັ້ນ, ທ່ານ ຮອງປະທານສະພາແຫ່ງຊາດ ໄດ້ມອບມະຕິແຕ່ງຕັ້ງໃຫ້ແກ່ບັນດາທ່ານປະທານ ແລະ ຮອງປະທານຄະນະ ສສຊ ປະຈຳ 3 ເຂດເລືອກຕັ້ງດັ່ງກ່າວ.

ທ່ານ ກອງແກ້ວ ໄຊສົງຄາມ ໄດ້ຕີລາຄາສູງຕໍ່ຄວາມບາກບັ່ນບຸກບືນ, ຄວາມພະຍາຍາມສູ້ຊົນ ຂອງຄະນະພັກ, ສະພາປະຊາຊົນແຂວງ, ອົງການປົກຄອງທຸກຂັ້ນ ໃນການນຳພາ-ຊີ້ນຳການພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະ ສະແດງຄວາມຊົມເຊີຍຕໍ່ບັນດາທ່ານທີ່ໄດ້ຖືກແຕ່ງຕັ້ງ ເພື່ອນຳພາ-ຊີ້ນຳວຽກງານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ພ້ອມທັງເນັ້ນໜັກໃຫ້ຄະນະ ສສຊ ຕ້ອງໄດ້ມີການວາງແຜນການເຄື່ອນໄຫວເປັນແຕ່ລະໄລຍະ; ມີການສະຫຼຸບຕີລາຄາລາຍງານຂັ້ນເທິງ ໂດຍອີງ ໃສ່ແຜນການເຄື່ອນໄຫວຂອງສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ກໍຄືຄະນະພັກແຂວງ ວາງອອກ ທັງປະສານສົມທົບກັບ ຄປຈ ສພຂ ກໍຄືອຳນາດການປົກຄອງແຂວງ ເພື່ອຄົ້ນຄວ້າຈັດຕັ້ງຜັນຂະຫຍາຍ 5 ແຜນງານ, 25 ໂຄງການ ທີ່ ສພຊ ວາງອອກ ໃຫ້ສອດຄ່ອງກັບຈຸດພິເສດ, ຄວາມເປັນຈິງ ແລະ ທ່າແຮງໃນເຂດເລືອກຕັ້ງຂອງຕົນ; ມີກົນໄກການປະສານງານກັບບັນດາກຳມາທິການ ແລະ ຫ້ອງວ່າການສະພາແຫ່ງຊາດ, ສະພາປະຊາຊົນແຂວງ ໃນການປະຕິບັດສິດ ແລະ ໜ້າທີ່ຂອງ ສພຊ ແລະ ຄປຈ ສພຊ; ອຳນາດການປົກຄອງແຂວງ ກໍຄືອຳນາດການປົກຄອງທຸກຂັ້ນ ຈົ່ງໃຫ້ການຮ່ວມມື, ສະໜັບສະໜູນ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວຂອງ ສສຊ-ສສຂ ເພື່ອເຮັດສຳເລັດໜ້າທີ່ການເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າໃນເຂດເລືອກຕັ້ງຂອງຕົນ.

(ນາງ ອາລົນ ສຸພົມມະດິດ)

Maldives ປະກາດໃຊ້ກົດໝາຍປ່ຽນຖ່າຍ ອະໄວຍະວະ ທີ່ຄົບຖ້ວນສະບັບທຳອິດ



(Xinhua) - ວັນທີ 24 ກໍລະກົດ 2026, ປະທານາທິບໍດີ ໂມຮາໝັດ ມຸອິຊຸ (Mohamed Muizzu) ແຫ່ງສາທາລະນະລັດມານດີວ ຫຼື ມັລດີຟສ໌ ໄດ້ໃຫ້ສັດຕະຍາບັນກົດໝາຍສະບັບທຳອິດຂອງປະເທດທີ່ຄົບຖ້ວນທຸກດ້ານ ກ່ຽວກັບການຜ່າຕັດປ່ຽນຖ່າຍອະໄວຍະວະຂອງມະນຸດ.

ກົດໝາຍການປ່ຽນຖ່າຍອະໄວຍະວະ (Organ Transplant Act) ສະບັບນີ້ ກຳນົດຂອບກົດໝາຍແລະລະບຽບການສຳລັບການບໍລິການປ່ຽນຖ່າຍອະໄວຍະວະທີ່ປອດໄພແລະມີຄຸນນະພາບສູງ ໂດຍກຳນົດຂັ້ນຕອນການປ່ຽນຖ່າຍ ແລະ ລະບຸສິດ ແລະ ຄວາມຮັບຜິດຊອບຂອງຜູ້ບໍລິຈາກ, ຜູ້ຮັບແລະຜູ້ໃຫ້ບໍລິການດ້ານສຸຂະພາບ; ພາຍໃຕ້ກົດໝາຍ, ສະພາການປ່ຽນຖ່າຍອະໄວຍະວະທີ່ໄດ້ຮັບການແຕ່ງຕັ້ງຈາກປະທານາທິບໍດີ ຈະເປັນຜູ້ກຳນົດນະໂຍບາຍການປ່ຽນຖ່າຍອະໄວຍະວະລະດັບຊາດ.

ຄະນະກຳມະການອະນຸຍາດການປ່ຽນຖ່າຍອະໄວຍະວະ ຈະປະເມີນ ແລະ ອະນຸມັດການຮ້ອງຂໍການປ່ຽນຖ່າຍແຕ່ລະບຸກຄົນ ເພື່ອຮັບປະກັນວ່າຂັ້ນຕອນຕ່າງໆປະຕິບັດຕາມກົດໝາຍ.

ກົດໝາຍສະບັບນີ້ ຍັງກຳນົດມາດຕະຖານສຳລັບການປ່ຽນຖ່າຍອະໄວຍະວະ ແລະ ກຳນົດຄວາມຜິດ ແລະ ການລົງໂທດ ສຳລັບຂັ້ນຕອນດຳເນີນການທີ່ລະເມີດກົດໝາຍ.

ລັດຖະບານກ່າວວ່າ ຂອບການເຮັດວຽກນີ້ ຈະຊ່ວຍຮັບປະກັນວ່າການໃຫ້ບໍລິການປ່ຽນຖ່າຍອະໄວຍະວະ ຈະດຳເນີນການຢ່າງປອດໄພ, ມີຈັນຍາບັນ ແລະ ສອດຄ່ອງກັບມາດຕະຖານລະດັບຊາດ.

ສະພາປະຊາຊົນໄດ້ຜ່ານຮ່າງກົດໝາຍດັ່ງກ່າວໃນເບື້ອງຕົ້ນເມື່ອວັນທີ 14 ພຶດສະພາ, ແຕ່ປະທານາທິບໍດີ ມຸອິຊຸ ໄດ້ສົ່ງກັບໃຫ້ພິຈາລະນາຄືນໃໝ່ ເມື່ອວັນທີ 31 ພຶດສະພາ; ກຳມາທິການສັງຄົມຂອງສະພາປະຊາຊົນ ໄດ້ສະເໜີປັບປຸງເມື່ອວັນທີ 1 ກໍລະກົດ ແລະ ສະມາຊິກສະພາ ໄດ້ອະນຸມັດຮ່າງກົດໝາຍທີ່ໄດ້ຮັບການປັບປຸງເມື່ອວັນທີ 14 ກໍລະກົດ ກ່ອນທີ່ຈະສົ່ງຄືນໃຫ້ປະທານາທິບໍດີ.

ກົດໝາຍສະບັບນີ້ ຈະມີຜົນບັງຄັບໃຊ້ 180 ວັນ ຫຼັງຈາກການປະກາດໃນຈົດໝາຍເຫດທາງລັດຖະການ.

ກອງປະຊຸມ...

(ຕໍ່ຈາກໜ້າ 1)

ທີ 1 ຂອງສະພາແຫ່ງຊາດ ຮັບຮອງເອົາ; ພິຈາລະນາຄົ້ນຄວ້າ ກົນໄກການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຂອງກຳມາທິການກົດໝາຍ ແລະ ຍຸຕິທຳ; ພິຈາລະນາການໃຫ້ສັດຕະຍາບັນວ່າດ້ວຍການຊ່ວຍເຫຼືອເຊິ່ງກັນແລະກັນທາງດ້ານກົດໝາຍໃນບັນຫາອາຍາ ລະຫວ່າງ ສປປລາວ ແລະ ສ.ເກົາຫຼີ; ພິຈາລະນາຮ່າງມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຊຸດທີ X; ຮັບຟັງລາຍງານກ່ຽວກັບການກະກຽມສະເຫຼີມສະຫຼອງວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 35 ປີ. ກອງປະຊຸມຍັງໄດ້ພິຈາລະນາໜັງສືສະເໜີຂອງລັດຖະບານ ກ່ຽວກັບການນຳໃຊ້ທີ່ດິນເຂົ້າໃນໂຄງການກໍ່ສ້າງແລວສາຍສົ່ງໄຟຟ້າແຮງສູງຢູ່ບາງແຂວງພາກເໜືອ; ພິຈາລະນາກ່ຽວກັບການຍົກເວັ້ນອາກອນມູນຄ່າເພີ່ມ ເພື່ອປະຕິບັດນະໂຍບາຍອຸດໜູນຄ່າໄຟຟ້າພາກທີ່ຢູ່ອາໄສ ສຳລັບຜູ້ມີລາຍໄດ້ຕ່ຳ; ພິຈາລະນາການແຕ່ງຕັ້ງບຸກຄະລາກອນຂອງສານປະຊາຊົນ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນຈຳນວນໜຶ່ງ.

ລາວ-ຫວຽດນາມ...

(ຕໍ່ຈາກໜ້າ 1)

ແລະ ຄວາມໄວ້ເນື້ອເຊື່ອໃຈອັນເປັນພື້ນຖານສຳຄັນຂອງສາຍພົວພັນລາວ-ຫວຽດນາມ. ການແລກປ່ຽນບົດຮຽນ ຈຶ່ງມີຄວາມສຳຄັນຕໍ່ການປັບປຸງກົງຈັກລັດ ໃຫ້ມີຄວາມກະທັດຮັດ, ມີປະສິດທິພາບ ແລະ ສອດຄ່ອງກັບສະພາບການໃໝ່; ດ້ວຍເຫດນັ້ນ, ສອງພັກ, ສອງລັດ ແລະ ສອງສະພາແຫ່ງຊາດລາວ-ຫວຽດນາມ ສືບຕໍ່ເສີມຂະຫຍາຍສາຍພົວພັນ ແລະ ການຮ່ວມມືຢ່າງສະໜິດແໜ້ນ, ແລກປ່ຽນບົດຮຽນ ແລະ ຮ່ຳຮຽນນຳກັນຢ່າງປົກກະຕິ ໃນໄລຍະແຫ່ງການສ້າງ ແລະ ປັບປຸງກົງຈັກລັດ ກໍຄືອົງການນິຕິບັນຍັດສູງສຸດໃຫ້ສຳເລັດສົມບູນຂຶ້ນ.

ສຳລັບ ສປປລາວ ພາຍຫຼັງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະກາດສ້າງຕັ້ງ(ໃນວັນທີ2ທັນວາ1975), ຄວາມຕ້ອງການຈັດຕັ້ງກົງຈັກລັດຄືນໃໝ່ ໄດ້ກາຍເປັນບັນຫາຮີບດ່ວນ. ຍ້ອນມີຄວາມຄ້າຍຄືກັນດ້ານອຸດົມການ ແລະ ເສັ້ນທາງກໍ່ສ້າງສັງຄົມໃໝ່; ສະນັ້ນ, ປະສົບການຂອງຫວຽດນາມ ໃນການຈັດຕັ້ງລັດ, ໃນນັ້ນ ມີສະພາແຫ່ງຊາດ - ອົງການນິຕິບັນຍັດສູງສຸດ, ຕິດຕາມກວດກາ ແລະ ຕົກລົງບັນດາບັນຫາສຳຄັນຂອງຊາດ ແມ່ນສຸດທີ່ສຳຄັນ.

ພາຍຫຼັງໄຊຊະນະຂອງການຕໍ່ຕ້ານກັບອາເມລິກາເພື່ອກູ້ຊາດ, ໃນເດືອນທັນວາ1975 ກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດລາວ ໄດ້ຈັດຂຶ້ນ ແລະ ເລືອກເອົາສະເດັດເຈົ້າສຸພານຸວົງ ເປັນປະທານສະພາປະຊາຊົນສູງສຸດ ທັງເປັນປະທານປະເທດ ແລະ ທ່ານ ໄກສອນ ພົມວິຫານ ເປັນປະທານສະພາລັດຖະມົນຕີ. ແຕ່ປີ 1975-1991, ສະພາປະຊາຊົນສູງສຸດ ນອກຈາກປະກາດໃຊ້ກົດໝາຍສຳຄັນຈຳນວນໜຶ່ງກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົງຈັກການຈັດຕັ້ງລັດ ເຊິ່ງໃນນັ້ນມີກົດໝາຍວ່າດ້ວຍການຈັດຕັ້ງສະພາລັດຖະມົນຕີ, ກົດໝາຍວ່າດ້ວຍອຳນາດການປົກຄອງທ້ອງຖິ່ນ(ປະກາດໃຊ້ປີ1978), ຍັງມີພາລະບົດບາດໃນການເຕົ້າໂຮມຄວາມສາມັກຄີແຫ່ງຊາດ, ຄວາມປອງດອງຊາດ ແລະ ຮຳບາດແຜສົງຄາມ. ກົນໄກເສດຖະກິດຕະຫຼາດພາຍໃຕ້ການນຳພາຂອງພັກ ແລະ ການຄຸ້ມຄອງຂອງລັດ ເຊັ່ນ: ນຳໃຊ້ສາຍພົວພັນສິນຄ້າ-ເງິນຕາ, ລະບອບລາຄາດຽວ, ຫັນກົນໄກແຜນການລວມສູນແບບເກື່ອກຸນໄປເທື່ອລະກ້າວ, ເປັນເຈົ້າຕົນເອງທາງດ້ານການເງິນ ແລະ ແຜນການຜະລິດ.ພິເສດ,ຕໍ່ໜ້າວິກິດການຂອງລະບົບສັງຄົມນິຍົມ, ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ V ຂອງພັກປະຊາຊົນປະຕິວັດລາວ ໄດ້ໄຂຂຶ້ນແຕ່ວັນທີ 27-29 ມີນາ 1991 ໄດ້ຢືນຢັນຄືນວ່າ ທາດແທ້ການປະຕິວັດລາວ: “ພວມຢູ່ໃນໄລຍະສືບຕໍ່ກໍ່ສ້າງແລະຂະຫຍາຍລະບອບປະຊາທິປະໄຕປະຊາຊົນ, ສ້າງປະຖິ້ມປັດໄຈເພື່ອກ້າວຂຶ້ນສູ່ສັງຄົມນິຍົມເທື່ອລະກ້າວ”; ກອງປະຊຸມໃຫຍ່ຂອງພັກ ໄດ້ເອົາໃຈໃສ່ເປັນພິເສດເຖິງພາລະກິດການປ່ຽນແປງໃໝ່ໃນລະບົບການເມືອງ: “ການປ່ຽນແປງໃໝ່ລະບົບການເມືອງຢູ່ປະເທດເຮົາ ບໍ່ໄດ້ໝາຍເຖິງການປ່ຽນລະບອບການເມືອງອື່ນ, ດ້ວຍລະບອບການເມືອງອື່ນ, ແຕ່ເພີ່ມທະວີການປັບປຸງທາງດ້ານການຈັດຕັ້ງຂອງລະບົບການເມືອງປະຊາທິປະໄຕປະຊາຊົນ ແລະ ປ່ຽນແປງວິທີການເຄື່ອນໄຫວບົນພື້ນຖານການກຳນົດພາລະບົດບາດ, ໜ້າທີ່ເຫດການການເມືອງທີ່ສຳຄັນ. ພາຍຫຼັງກອງປະຊຸມໃຫຍ່ ຄັ້ງທີ V, ໃນວັນທີ 15 ສິງຫາ 1991, ສະພາປະຊາຊົນສູງສຸດ ຊຸດທີ II (ໄລຍະປີ 1989-1991) ໄດ້ຮັບຮອງເອົາລັດຖະທຳມະນູນສະບັບທຳອິດ; ໃນໄລຍະປີ1975-1991 ຂອງການຄຸ້ມຄອງ ແລະ ບໍລິຫານປະເທດຊາດທັງໝົດ ຂອງ ສປປລາວ ທີ່ບໍ່ມີລັດຖະທຳມະນູນ, ແຕ່ຕົ້ນຕໍແມ່ນໄດ້ປະຕິບັດຕາມບັນດາຄຳສັ່ງ ແລະ ມະຕິຂອງພັກ. ໃນກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ III ໄດ້ໄຂຂຶ້ນຢ່າງເປັນທາງການ ແຕ່ວັນທີ 20-25 ກຸມພາ 1993, ສະພາປະຊາຊົນສູງສຸດ ຊຸດທີ II ໄດ້ຖືກປ່ຽນແທນເປັນສະພາແຫ່ງຊາດ ຊຸດທີ III.

ນັບແຕ່ປີ 1992 ເປັນຕົ້ນມາ, ບັນດາສະຖາບັນກົງຈັກລັດຂອງ ສປປລາວ ໄດ້ປ່ຽນຊື່, ພາລະບົດບາດ ແລະ ໜ້າທີ່ຢ່າງຄົບຖ້ວນ ຕາມລັດຖະທຳມະນູນ ປີ 1991. ສະພາປະຊາຊົນສູງສຸດ ຖືກເອີ້ນວ່າ: ສະພາແຫ່ງຊາດ ໃນຖານະເປັນອົງການຕົວແທນແຫ່ງອຳນາດ ແລະ ຜົນປະໂຫຍດຂອງປະຊາຊົນ, ອົງການສິດອຳນາດແຫ່ງລັດ, ອົງການໜຶ່ງດຽວທີ່ມີສິດສ້າງລັດຖະທຳມະນູນ ແລະ ກົດໝາຍ, ອົງການທີ່ຕົກລົງບັນດາບັນຫາສຳຄັນຂອງຊາດ, ຕິດຕາມກວດກາບັນດາການເຄື່ອນໄຫວຂອງລັດຖະບານ ໃນການປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ເຊັ່ນດຽວກັນກັບຫວຽດນາມ; ນັບແຕ່ເວລານີ້ໄປ, ຄະນະປະຈຳສະພາແຫ່ງຊາດ ໄດ້ຮັບການເລືອກຕັ້ງ, ສະພາແຫ່ງຊາດ ສ້າງຕັ້ງກຳມາທິການ. ສະພາລັດຖະມົນຕີ ໄດ້ປ່ຽນຊື່ເປັນລັດຖະບານ ເຊິ່ງມີນາຍົກລັດຖະມົນຕີເປັນຫົວໜ້າ ໂດຍມີບັນດາກະຊວງ, ຄະນະກຳມະການ, ຂະແໜງການ ແລະ ທ້ອງຖິ່ນຕ່າງໆ. ນັບແຕ່ນີ້ເປັນຕົ້ນໄປ, ໂຄງປະກອບການຈັດຕັ້ງຂອງກົງຈັກລັດເວົ້າລວມ, ສະພາແຫ່ງຊາດລາວເວົ້າສະເພາະແມ່ນມີຄວາມໝັ້ນຄົງ ແລະ ນັບມື້ເຄື່ອນໄຫວຢ່າງມີປະສິດທິພາບ ແລະ ມີປະສິດທິຜົນກວ່າເກົ່າ.

ມາຮອດປັດຈຸບັນ, ສະພາແຫ່ງຊາດລາວ ເປັນອົງການສູງສຸດແຫ່ງອຳນາດລັດ, ໂດຍປະຊາຊົນເລືອກຕັ້ງໂດຍກົງ, ຕາງໜ້າຜົນປະໂຫຍດຂອງປະຊາຊົນ, ເປັນອົງການນິຕິບັນຍັດ,ຕົກລົງບັນຫາສຳຄັນຂອງຊາດ, ຕິດຕາມກວດກາການ ເຄື່ອນໄຫວຂອງອົງການບໍລິຫານ, ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ. ສະພາແຫ່ງຊາດ ມີສິດເລືອກຕັ້ງ ຫຼື ປົດຕຳແໜ່ງ ປະທານສະພາແຫ່ງຊາດ, ຮອງປະທານສະພາແຫ່ງຊາດ, ກຳມະການຄະນະປະຈຳສະພາແຫ່ງຊາດ; ເລືອກຕັ້ງ ຫຼື ປົດຕຳແໜ່ງປະທານປະເທດ, ຮອງປະທານປະເທດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ; ພິຈາລະນາ ແລະ ຮັບຮອງເອົາການສະເໜີແຕ່ງຕັ້ງ ຫຼື ປົດຕຳແໜ່ງ ນາຍົກລັດຖະມົນຕີ, ປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຕາມການສະເໜີຂອງປະທານປະເທດ; ພິຈາລະນາ ແລະ ຮັບຮອງເອົາໂຄງປະກອບກົງຈັກລັດຖະບານ, ແຕ່ງຕັ້ງ ຫຼື ປົດຕຳແໜ່ງສະມາຊິກລັດຖະບານຕາມການສະເໜີຂອງນາຍົກລັດຖະມົນຕີ. ສະພາແຫ່ງຊາດລາວແຕ່ລະຊຸດ ມີອາຍຸ 5 ປີ.

ສະນັ້ນ,ຄວາມຕ້ອງການຮ່ວມມືຊ່ວຍເຫຼືອເຊິ່ງກັນແລະກັນໃນການສ້າງກົງຈັກການຈັດຕັ້ງລັດໃຫ້ສຳເລັດເວົ້າລວມ,ອົງການນິຕິບັນຍັດ ແລະ ອົງການຕິດຕາມກວດກາຕາມກົດໝາຍ ກຳນົດຂອງສະພາແຫ່ງຊາດສອງ ປະເທດລາວ ແລະ ຫວຽດນາມ

 # ບ່າວກະບື

“ທ່ານໝໍ, ຂໍຢານອນຫຼັບໃຫ້ເມຍຂ້ອຍອີກເມ็ดທ້ອນ”

“ຄືນອານນີ້ກະດຽວອ່າເຈົ້າເອົາໄປເມ็ดກ້ອນໜຶ່ງ, ເປັນຫຍັງຍັງເຮັ້ໆຈັ່ງຊີ້ ເຈົ້າຈຶ່ງຢາກໄດ້ຕື່ມອີກ?”

“ຂ້ອຍຢາກໄດ້ ກໍເພາะອ່າເມຍຂ້ອຍຫາກໍ່ຕື່ນນອນ”

 # BAOKBU

“Doctor, please give me a sleeping pill for my wife”

“But yesterday night you had taken one pill from me, Why do you need one more in the mornign?”

“My wife has just woken up. Hence I need a pill”

ເວົ້າສະເພาะ ແມ່ນມີຄວາມຕ້ອງການສູງສຸດ; ສິ່ງເຫຼົ່ານີ້ ເກີດຈາກຄວາມຮຽກຮ້ອງຕ້ອງການຕົວຈິງຂອງການກໍ່ສ້າງ, ປົກປັກຮັກສາ ແລະ ສ້າງລະບອບໃໝ່ໃຫ້ສົມບູນພາຍຫຼັງໄຊຊະນະຂອງການປະຕິວັດຊາດປະຊາທິປະໄຕ ຂອງປະຊາຊົນ ເພື່ອກ້າວຂຶ້ນສູ່ສັງຄົມນິຍົມ ຢູ່ ລາວ-ຫວຽດນາມ ກໍຄືຄວາມຮຽກຮ້ອງຕ້ອງການຂອງພາລະກິດປ່ຽນແປງໃໝ່ໃນທົ່ວປະເທດ ພາຍໃຕ້ການນຳພາຢ່າງເດັດຂາດຮອບດ້ານຂອງພັກກຳອຳນາດຢູ່ແຕ່ລະປະເທດ, ສອດຄ່ອງກັບສາຍພົວພັນຢ່າງສະເໝີຕົ້ນສະເໝີປາຍສະໜິດແໜ້ນຂອງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ແລະ ຫວຽດນາມ-ລາວ.

ຄັດຈາກເຜຈ: ປະເທດລາວ
Pathedlao

ຜູ້ຊີ້ນຳ
ທ່ານ ເຂັມພອນ ອາໂນໄທ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ

ຄະນະບັນນາທິການ
ທ່ານ ບໍ ທານປະເສີດ ຫົວໜ້າ ບກ
ທ່ານ ເອລາວັນ ພັນທະລາວົງ ຮອງຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

ກອງບັນນາທິການ
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

ອອກແບບ - ຈັດໜ້າ
ທ່ານ ນາງ ກຸກກົກ ບຸດດາໄຊ

ຮູບພາບປະກອບ
ທ່ານ ສອນສັກ ວັນວິໄຊ
ທ່ານ ອານຸສອນ ພູມມີທອນ